ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບົດລາຍງານຜົນການດຳເນີນທຸລະກິດ ໄຕມາດ 1

31 ມີນາ 2018



Lao-Thai Friendship Road, Thongkang Village, Sisattanak District, P.O. Box 2392, Vientiane Capital. Lao PDR.
Tel: (856-21)316142. Fax: (856-21)316141, Email: edlgenhq@edlgen.com.la website: www.edlgen.com.la

ສາລະບານ

1. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.....2

2. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ: 3

3. ກົງຈັກການຈັດຕັ້ງ. 4

3.1 ໂຄງຮ່າງການຈັດຕັ້ງ.....4

4. ຄະນະກຳມະການຕ່າງໆ.....7

4.1 ຄະນະກຳມະການຂອງສະພາບໍລິຫານ. 7

1. ຄະນະກຳມະການກວດສອບ..... 7

2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ.....7

3. ຄະນະກຳມະການກຳນົດຄ່າຕອບແທນ.....7

4. ຄະນະກຳມະການຄັດເລືອກ.....7

5. ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ.....8

4.2. ຄະນະກຳມະການຂອງ ຄະນະອຳນວຍການໃຫຍ່ 8

1. ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້ຂາຍໄຟຟ້າ 8

2. ຄະນະກຳມະການຈັດຊື້ ແລະ ສະໜອງວັດສະດຸອຸປະກອນ (ຄຈຊ).....8

3. ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ (ຄນຍວ).....8

5. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ.....8

5.1 ການຜະລິດ.....8

5.2 ລາຍຮັບ. 9

5.3 ລາຍຈ່າຍ. 9

5.4 ກຳໄລໃນການດຳເນີນທຸລະກິດ 9

5.5 ການມອບພັນທະ 9

ເອກະສານລາຍງານການເງິນ

1. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຖືກສ້າງຕັ້ງຂຶ້ນ ໃນວັນທີ 15 ທັນວາ 2010 ໂດຍ ລັດວິສາຫະກິດ ໄຟຟ້າລາວ (ຟຟລ) ໂອນເອົາບັນດາເຂື່ອນ ແລະ ຊັບສິນທີ່ກ່ຽວຂ້ອງກັບການຜະລິດມາໃຫ້ ຜ-ຟຟລ, ຊຶ່ງປະກອບດ້ວຍ: ເຂື່ອນໄຟຟ້ານ້ຳງື່ມ 1, ເຂື່ອນໄຟຟ້ານ້ຳມັງ 3, ເຂື່ອນໄຟຟ້ານ້ຳເລິກ, ເຂື່ອນໄຟຟ້າເຊເສັດ 1 ແລະ ເຂື່ອນໄຟຟ້າເຊເສັດ 2, ເຂື່ອນໄຟຟ້າເຊລະບໍ ແລະ ເຂື່ອນໄຟຟ້ານ້ຳຊອງ, ລວມມີກຳລັງຕິດຕັ້ງທັງໝົດ 387 MW; ພ້ອມດ້ວຍພະນັກງານທີ່ປະຈຳຢູ່ເຂື່ອນທັງໝົດ ແລະພະນັກງານສຳນັກງານໃຫຍ່ ຈຳນວນໜຶ່ງໃຫ້ແກ່ ຜ-ຟຟລ.

ໃນເບື້ອງຕົ້ນ ຜ-ຟຟລ ມີທຶນຈົດທະບຽນຈຳນວນ 2.605.792.200.000 ກີບ ແລະ ຄິດເປັນຮຸ້ນ 651.448.050 ຮຸ້ນ (ຮຸ້ນລະ 4.000 ກີບ). ຈາກນັ້ນ ບໍລິສັດ ໄດ້ຕົກລົງໃຫ້ມີການເພີ້ມທຶນດ້ວຍການອອກຮຸ້ນຄັ້ງທຳອິດ (IPO) ດ້ວຍຈຳນວນຮຸ້ນ 217.149.000 ຮຸ້ນ ໃຫ້ມະຫາຊົນທົ່ວໄປ, ໃນວັນທີ 07 ມັງກອນ 2011 ບໍລິສັດໄດ້ຈົດທະບຽນດ້ວຍທຶນທັງໝົດ 3.474.388.200.000 ກີບ ແລະ ມີຈຳນວນຮຸ້ນທັງໝົດ 868.597.050 ຮຸ້ນ. ໃນວັນທີ 11 ມັງກອນ 2011, ຜ-ຟຟລ ຈຶ່ງໄດ້ຈົດທະບຽນເຂົ້າໃນ ຕະຫລາດຫລັກຊັບ ລາວ ເພື່ອຈຳໜ່າຍຮຸ້ນໃນຕະຫລາດຂັ້ນ II ໃຫ້ນັກລົງທຶນຢ່າງເປັນທາງການ. ຊັດສ່ວນການຖືຮຸ້ນໃນ ຜ-ຟຟລ ຈຶ່ງມີ ຟຟລ 75% ແລະ ອີກ 25% ແມ່ນຂອງນັກລົງທຶນພາຍໃນແລະ ຕ່າງປະເທດ.

ໃນກາງ ປີ 2012, ຜ-ຟຟລ ໄດ້ອອກຮຸ້ນສາມັນ ແບບສະເໜີຂາຍໃຫ້ຜູ້ຖືຮຸ້ນ ແລະ ແບບສະເໜີຂາຍຕໍ່ມວນຊົນທົ່ວໄປ ເພື່ອລະດົມທຶນໄປຊື້ເອົາຮຸ້ນໃນ 4 ເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຟຟລ ຖືຮຸ້ນຢູ່ ຊຶ່ງ ປະກອບມີ:ເຂື່ອນໄຟຟ້າເທີນຫີນບູນ (60%), ເຂື່ອນໄຟຟ້ານ້ຳງື່ມ 2 (25%), ເຂື່ອນໄຟຟ້າຫ້ວຍເຫາະ (20%) ແລະ ເຂື່ອນໄຟຟ້ານ້ຳລີກ 1-2 (10%) ຊຶ່ງມີກຳລັງຕິດຕັ້ງທັງໝົດ 494 MW (ຕາມຊັດສ່ວນການຖືຮຸ້ນ) ເຮັດໃຫ້ກຳລັງຕິດຕັ້ງທັງໝົດຂອງ ຜ-ຟຟລ ມີຕົວເລກຢູ່ 881 MW. ດັ່ງນັ້ນໃນທ້າຍປີ 2012 ຜ-ຟຟລ ມີທຶນຈົດທະບຽນເປັນເງິນ 4.904.867.060.000 ກີບ ແລະມີຮຸ້ນທັງໝົດ 1.226.216.765 ຮຸ້ນ ຊັດສ່ວນການຖືຮຸ້ນ ຍັງຮັກສາເໝືອນເດີມ.

ໃນເດືອນ ຕຸລາ 2014, ຜ-ຟຟລ ໄດ້ກາຍເປັນ ບໍລິສັດມະຫາຊົນທຳອິດ ໃນ ສປປ ລາວ ທີ່ໄດ້ຮັບການ ຈັດລຳດັບຄວາມໜ້າເຊື່ອຖື ໂດຍ ບໍລິສັດ TRIS Rating ຈຳກັດ ໃນລະດັບ BBB+, ເຊິ່ງຈັດຢູ່ໃນກຸ່ມ Investment Grade ຫຼື ໃນກຸ່ມລະດັບຄວາມສ່ຽງທີ່ເໝາະສົມ ແລະ ລົງທຶນໄດ້.

ໃນວັນທີ 12 ທັນວາ 2014, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ ແລະ ສາມາດລະດົມທຶນໄດ້ 6.500 ລ້ານບາດ. ທຶນຈຳນວນດັ່ງກ່າວນີ້ ແມ່ນຈະຖືກນຳໃຊ້ ເພື່ອຂະຫຍາຍກຳລັງການຜະລິດເພີ່ມຕື່ມ ຈຳນວນ 392 MW, ໃນນັ້ນມີ ໂຄງການຜະລິດໄຟຟ້າຈາກ ຟຟລ ຈຳນວນ 4 ໂຄງການ ລວມກຳລັງຕິດຕັ້ງ 292 MW ແລະ ຊື້ຮຸ້ນທີ່ ຟຟລ ຖືໃນໂຄງການ IPP ອີກ 5 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 100 MW.

ມາຮອດ ວັນທີ 10 ກຸມພາ 2015, ຜ-ຟຟລ ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້ານ້ຳງື່ມ 5 (15%) ຕາມ ຊັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 18 MW ເຮັດໃຫ້ມີກຳລັງຕິດຕັ້ງເພີ້ມຂຶ້ນເປັນ 899 MW.

ເພື່ອສືບຕໍ່ໃຫ້ບໍລິສັດເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນ ເດືອນ ກັນຍາ 2015 ຜ-ຟຟລ ໄດ້ອອກຮຸ້ນເພີ່ມທຶນຄັ້ງທີ 3, ເຮັດໃຫ້ລະດົມທຶນໄດ້ 2.754 ຕື້ກີບ. ເງິນທຶນທີ່ລະດົມໄດ້ໃນຄັ້ງນີ້ຈະຖືກນຳໃຊ້ເຂົ້າໃນ ການຂະຫຍາຍກຳລັງຕິດຕັ້ງ ຂອງບໍລິສັດ ເພີ່ມຕື່ມຈຳນວນ 386,2 MW, ໃນນັ້ນມີ ໂຄງການຜະລິດໄຟຟ້າທີ່ ຈະຮັບໂອນຈາກ ຟຟລ ຈຳນວນ 5 ໂຄງການ ລວມ 277,9 MW, ການລົງທຶນໃນຮຸ້ນ ຂອງ ຟຟລ ໃນບັນດາ ໂຄງການ IPP ຈຳນວນ 6 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 108,3 MW. ເຮັດໃຫ້ທຶນຈົດທະບຽນເປັນເງິນ 6.717.214.788.000 ກີບ ແລະ ມີຮຸ້ນທັງໝົດ 1.679.303.697 ຮຸ້ນ ຊັດສ່ວນການຖືຮຸ້ນ ຍັງຮັກສາເໝືອນເດີມ.

ໃນ ວັນທີ 24 ທັນວາ ປີ 2015, ຜ-ຟຟລ ໄດ້ຮັບໂອນ ເຂື່ອນໄຟຟ້ານ້ຳຄານ 2 ກຳລັງຕິດຕັ້ງ 130 MW, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ກຳລັງຕິດຕັ້ງ 88 MW ແລະ ເຂື່ອນໄຟຟ້ານ້ຳສະນາ ກຳລັງຕິດຕັ້ງ 14 MW ເຮັດ ໃຫ້ມີກຳລັງຕິດຕັ້ງທັງໝົດເພີ່ມຂຶ້ນເປັນ 1.131 MW.

ໃນວັນທີ 2 ກັນຍາ 2016, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ເປັນເງິນໂດລາສະຫາລັດທີ່ປະເທດໄທ ທຶນຈຳນວນດັ່ງກ່າວນີ້ ແມ່ນຈະຖືກນຳໃຊ້ໃນ 10 ໂຄງການປະກອບມີ: ໂຄງການແຊລະບໍ່ພາກຂະຫຍາຍ, ໂຄງການເຊເສັດ 2 ພາກຂະຫຍາຍ, ໂຄງການນ້ຳເທີນ 1, ໂຄງການປາກແບ່ງ, ໂຄງການພະລັງງານແສງອາທິດ (Solar), ໂຄງການນ້ຳດິກ 1, ໂຄງການສ້ອມແປງໃຫຍ່ເຂື່ອນໄຟຟ້າເຊເສັດ 1-2, ໂຄງການສ້ອມແປງໃຫຍ່ຈັກ ເບີ 2 ເຂື່ອນໄຟຟ້ານ້ຳມັງ 3, ໂຄງການນ້ຳພູນ (Finance Cost), ແລະ ໂຄງການນ້ຳບີ 1, 2, 3 (Finance Cost) ຊຶ່ງວົງເງິນໃນການລະດົມທຶນຄັ້ງນີ້ 312 ລ້ານໂດລາສະຫາລັດ.

2. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ

1. ຜະລິດໄຟຟ້າຂາຍຍົກໃຫ້ແກ່ ລັດວິສາຫະກິດໄຟຟ້າລາວ ,ກໍ່ສ້າງລະບົບສາຍສົ່ງ ແລະ ສະຖານີໄຟຟ້າຖ້າ ຫາກມີຄວາມຈຳເປັນ;
2. ລົງທຶນໃນບັນດາຊັບສິນທີ່ໃຊ້ໃນການຜະລິດໄຟຟ້າຂອງ ຟຟລ ເຊິ່ງກຳລັງໄດ້ຮັບການກໍ່ສ້າງ ແລະ ໄດ້ຂຶ້ນ ແຜນໄວ້ແລ້ວ ຫລື ລົງທຶນດ້ວຍການເຂົ້າຖືຮຸ້ນທັງໝົດ ຫລື ບາງສ່ວນແທນ ຟຟລ ໃນບັນດາໂຄງການຜູ້ ຜະລິດໄຟຟ້າເອກະລາດ (Independent Power Producer: IPP);
3. ຮັບໝໍ້ບໍລິການ ການເດີນເຄື່ອງ ແລະບຳລຸງຮັກສາ (Operation& Maintenance Service) ໃຫ້ແກ່ ບັນດາໂຄງການຜະລິດໄຟຟ້າຕ່າງໆໃນຂອບເຂດທົ່ວປະເທດ.

❖ ວິໄສທັດ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ມີຄວາມປາດຖະໜາຢ່າງແຮງກ້າ. (1) ເປັນບໍລິສັດນຳໜ້າ ອັນດັບໜຶ່ງ ຂອງ ສປປ ລາວ ໃນການຮັບປະກັນ ແລະ ການຕອບສະໜອງພະລັງງານໄຟຟ້າຢ່າງພຽງພໍ ແລະ ທັນການໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ. (2) ເປັນບໍລິສັດທີ່ຈະປະກອບສ່ວນຢ່າງ ແຂງແຮງສ້າງໃຫ້ ສປປ ລາວ ກາຍເປັນຫມໍ້ໄຟຂອງອາຊຽນ ແລະ ປະກອບສ່ວນຢ່າງເຕັມກຳລັງ ເພື່ອເຮັດໃຫ້ ຂົງເຂດອາຊຽນມີຄວາມຫມັ້ນຄົງທາງດ້ານພະລັງງານໄຟຟ້າຢ່າງຍືນຍົງ.

❖ ພັນທະກິດ


1. ເປັນບໍລິສັດນຳໜ້າອັນດັບຫນຶ່ງໃນການດຳເນີນທຸລະກິດຜະລິດໄຟຟ້າ ເພື່ອຮັບໃຊ້ພາຍໃນປະເທດ ແລະ ພາຍໃນຂົງເຂດພາກພື້ນດ້ວຍລາຄາທີ່ສົມເຫດສົມຜົນ ແລະ ສ້າງມູນຄ່າໃຫ້ແກ່ຜູ້ຖືຮຸ້ນ.
2. ຢືນຄຽງຄູ່ ແລະ ສົມທົບຢ່າງສະຫນິດແຫນ້ນກັບ ລັດວິສາຫະກິດໄຟຟ້າລາວ ຮ່ວມຮັກສາຄວາມຫມັ້ນຄົງ ທາງດ້ານພະລັງງານບໍ່ວ່າທາງດ້ານປະລິມານກໍຄຸນນະພາບ ເພື່ອສະໜອງໃຫ້ແກ່ການພັດທະນາເສດຖະ ກິດ-ສັງຄົມ ໃນຂອບເຂດທົ່ວປະເທດ ແລະໃນຂົງເຂດອາຊຽນ.
3. ຕັ້ງໜ້າຍົກສູງ ແລະພັດທະນາຄຸນສົມບັດ ແລະຄວາມສາມາດຂອງພະນັກງານ ຂອງ ບໍລິສັດ ໃນທຸກ ລະດັບໃຫ້ມີຄວາມກ້າວໜ້າ ແລະມີສ່ວນຮ່ວມໃນການຂະຫຍາຍ ແລະພັດທະນາບໍລິສັດດ້ວຍຄວາມ ຮູ້ສຶກທີ່ພາກພູມໃຈ, ມີຄວາມຮັບຜິດຊອບ ແລະເປັນເຈົ້າຂອງ.

3. ภาวะการจัดตั้ง

3.1 โครงสร้างการจัดตั้ง

ໂຄງຮ່າງການຈັດຕັ້ງ ຜ-ຟຟລ ປະກອບດ້ວຍສະພາບໍລິຫານ 09 ທ່ານ (ໃນນີ້ຜູ້ອຳນວຍການອິດສະຫລະ 3 ທ່ານ) ຄະນະຜູ້ອຳນວຍການໃຫຍ່ 4 ທ່ານ, ຜູ້ຊ່ວຍຜູ້ອຳນວຍການໃຫຍ່ 2 ທ່ານ, ມີ 5 ຝ່າຍ, 15 ພະແນກ ແລະ 10 ເຂື່ອນ.

ໂຄງຮ່າງການຈັດຕັ້ງ ບໍລິສັດ ຜະລິດ - ໄຟຟ້າລາວ ມະຫາຊົນ



❖ **ຈຳນວນພົນ**

ຈຳນວນພົນ ຂອງ ຜ-ຟຟລ ມີທັງໝົດ 890 ຄົນ, ຍິງ 175 ຄົນ; ໃນນີ້ ພະນັກງານຖາວອນ 608 ຄົນ, ຍິງ 105 ຄົນ, ພະນັກງານສັນຍາຈ້າງ 282 ຄົນ, ຍິງ 70 ຄົນ.

ລາຍລະອຽດ	ພະນັກງານຖາວອນ				ພະນັກງານສັນຍາຈ້າງ			
ສຳນັກງານໃຫຍ່	103	ຄົນ,	ຍິງ	37 ຄົນ	24	ຄົນ,	ຍິງ	13 ຄົນ
ເຂື່ອນໄຟຟ້ານ້ຳງື່ມ 1	128	ຄົນ,	ຍິງ	28 ຄົນ	60	ຄົນ,	ຍິງ	17 ຄົນ
ເຂື່ອນໄຟຟ້ານ້ຳຄານ 2-3	53	ຄົນ,	ຍິງ	4 ຄົນ	23	ຄົນ,	ຍິງ	7 ຄົນ
ເຂື່ອນໄຟຟ້າເຊເສັດ 1-2	76	ຄົນ,	ຍິງ	15 ຄົນ	63	ຄົນ,	ຍິງ	8 ຄົນ
ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່	40	ຄົນ,	ຍິງ	1 ຄົນ	22	ຄົນ,	ຍິງ	4 ຄົນ
ເຂື່ອນໄຟຟ້ານ້ຳເລີກ	50	ຄົນ,	ຍິງ	4 ຄົນ	24	ຄົນ,	ຍິງ	5 ຄົນ
ເຂື່ອນໄຟຟ້ານ້ຳມັງ 3	49	ຄົນ,	ຍິງ	7 ຄົນ	11	ຄົນ,	ຍິງ	3 ຄົນ
ເຂື່ອນໄຟຟ້າເຊເສັດ 3	23	ຄົນ,	ຍິງ	3 ຄົນ	13	ຄົນ,	ຍິງ	4 ຄົນ
ເຂື່ອນໄຟຟ້ານ້ຳສະນ້ຳ	21	ຄົນ,	ຍິງ	1 ຄົນ	13	ຄົນ,	ຍິງ	3 ຄົນ
ເຂື່ອນໄຟຟ້ານ້ຳຊອງ	21	ຄົນ,	ຍິງ	1 ຄົນ	10	ຄົນ,	ຍິງ	2 ຄົນ
ເຂື່ອນໄຟຟ້າເຊເລະບ້ຳ	29	ຄົນ,	ຍິງ	4 ຄົນ	18	ຄົນ,	ຍິງ	4 ຄົນ
ເຂື່ອນໄຟຟ້າຕາດສະແລນ	9	ຄົນ,	ຍິງ	0 ຄົນ	1	ຄົນ,	ຍິງ	0 ຄົນ
ພະນັກງານປະຈຳໂຄງການ O&M ເຊປຽນ-ເຊນ້ຳນ້ອຍ	6	ຄົນ,	ຍິງ	0 ຄົນ	0	ຄົນ,	ຍິງ	0 ຄົນ
ລວມທັງໝົດ	608	ຄົນ,	ຍິງ	105 ຄົນ	282	ຄົນ,	ຍິງ	70 ຄົນ

* **ໝາຍເຫດ :** ຜ-ຟຟລ ໄດ້ສົ່ງພະນັກງານໄປຮັບເໜົ້າການເດີນເຄື່ອງ-ການບຳລຸງຮັກສາ ຢູ່ເຂື່ອນໄຟຟ້ານ້ຳຄານ 3 ເຂື່ອນໄຟຟ້າເຊເສັດ 3 & ເຂື່ອນໄຟຟ້າຕາດສະແລນ

ຄະນະສະພາບໍລິຫານ
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



ທ່ານ ປອ. ຄຳມະນີ ອິນທິລາດ
ປະທານສະພາບໍລິຫານ



ທ່ານ ບຸນອຸ້ມ ສີວັນເພັງ
ຮອງປະທານສະພາບໍລິຫານ



ທ່ານ ນ. ລັດຕະນາ ປະທຸມວັນ
ກຳມະການ



ທ່ານ ບຸນມາ ມະນີວົງ
ກຳມະການ



ທ່ານ ນ. ວານິດາ ສະຫວັດດີ
ກຳມະການ



ທ່ານ ສີຈາດ ບຸດຊາກິດຕິລາດ
ກຳມະການ



ຮສ.ປອ. ກອງສີ ແສງມະນີ
ກຳມະການອິດສະຫລະ



ສຈ.ປອ. ຄຳລືຊາ ນອນສະຫວັນ
ກຳມະການອິດສະຫລະ



ຮສ. ຄຳເພີ ພົມມະຈັນ
ກຳມະການອິດສະຫລະ

ຄະນະຜູ້ອຳນວຍການໃຫຍ່
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



ທ່ານ ນ. ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່



ທ່ານ ທອງເພັດ ດ້ວງເງິນ
ຮອງຜູ້ອຳນວຍການໃຫຍ່
ສາຍງານພັດທະນາທຸລະກິດ



ທ່ານ ປອ. ບຸນສະຫລອງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່
ສາຍງານການເງິນ



ທ່ານ ພູມມີ ເນຕິບັນດິດ
ຮອງຜູ້ອຳນວຍການໃຫຍ່
ສາຍງານຜະລິດ



ທ່ານ ວິຣະຖາ ພອນແກ້ວ
ຜູ້ຊ່ວຍ ຜູ້ອຳນວຍການໃຫຍ່
ຜູ້ອຳນວຍການ ຝ່າຍພັດທະນາທຸລະກິດ



ທ່ານ ນ. ສຸກສັນ ພິງພິລາ
ຜູ້ຊ່ວຍ ຜູ້ອຳນວຍການໃຫຍ່
ຜູ້ອຳນວຍການ ຝ່າຍແຜນການ

4. ຄະນະກຳມະການຕ່າງໆ.

ເພື່ອເຮັດໃຫ້ວຽກງານຂອງບໍລິສັດ ມີຄວາມຮັບປະກັນທາງດ້ານຄຸນນະພາບ ແລະ ມີລະບຽບແບບແຜນ ຕາມກົດໝາຍກົດລະບຽບ ທີ່ກ່ຽວຂ້ອງ; ສະພາບໍລິຫານ ຜ-ຟຟລ ຈຶ່ງໄດ້ແຕ່ງຕັ້ງຄະນະກຳມະການຕ່າງໆຂຶ້ນ ປະກອບມີ ຄະນະກຳມະການ ຂອງ ສະພາບໍລິຫານ ແລະ ຄະນະກຳມະການ ຂອງ ຄະນະອຳນວຍການໃຫຍ່ ເພື່ອຄົ້ນຄວ້າພິຈາລະນາວຽກງານ, ລະອຽດດັ່ງລຸ່ມນີ້:

4.1. ຄະນະກຳມະການຂອງສະພາບໍລິຫານ

1. ຄະນະກຳມະການກວດສອບ

ໃນການດຳເນີນງານ ໄຕມາດ 1 ປີ 201 8 ຄະນະກຳມະການກວດສອບ ໄດ້ຈັດກອງປະຊຸມທັງໝົດ 2 ຄັ້ງຄື: ປະຊຸມວິສາມັນ 1 ຄັ້ງ ແລະ ປະຊຸມສາມັນ 1 ຄັ້ງ, ດັ່ງນີ້:

- ວັນທີ 19 ກຸມພາ 2018 ໄດ້ປະຊຸມວິສາມັນຄັ້ງທີ່ 1 ເພື່ອປຶກສາຫາລືກ່ຽວກັບຜົນການກວດສອບ ເຂື່ອນໄຟຟ້ານ້ຳງື່ມ 1 , ເຂື່ອນໄຟຟ້ານ້ຳມັງ 3 ແລະ ສຳນັກງານໃຫຍ່, ແຜນປະຊຸມຂອງຄະນະ ກຳມະການກວດສອບ ແລະ ແຜນອອກວຽກສະໜາມຂອງພະແນກກວດສອບພາຍໃນ.
- ວັນທີ 07 ມີນາ 2018 ໄດ້ປະຊຸມສາມັນ ຄັ້ງທີ1 ເພື່ອປຶກສາຫາລືກ່ຽວກັບບົດລາຍງານງົບການເງິນ ຂອງ ຜ-ຟຟລ ປະຈຳປີ 2017 , ຊຶ່ງໄດ້ຜ່ານນັກກວດສອບບັນຊີພາຍນອກ (KPMG), ທັ້ງໄດ້ມີຄຳ ເຫັນຕໍ່ຮ່າງບົດລາຍງານການເງິນ ດັ່ງກ່າວ ແລະ ໄດ້ເຮັດສະໂນດນຳສົ່ງໃຫ້ກອງເລຂາສະພາຜູ້ບໍລິຫານ ເພື່ອຮັບຮອງໃນກອງ ປະຊຸມກ່ອນທີ່ຈະເປີດເຜີຍຂໍ້ມູນທີ່ຕະຫຼາດຫຼັກຊັບລາວ.

2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ໃນການດຳເນີນງານ ໄຕມາດ 1 ປີ 2018 ຄະນະກຳມະການ ຄຸ້ມຄອງຄວາມສ່ຽງ ໄດ້ເປີດກອງປະຊຸມຂຶ້ນ 1 ຄັ້ງ:

- ໃນວັນທີ 05/02/2018 ເຊິ່ງເນື້ອໃນກອງປະຊຸມແມ່ນເພື່ອຄົ້ນຄ້ວາ ແລະ ປຶກສາຫາລືກ່ຽວກັບຄວາມ ສ່ຽງທາງດ້ານການເງິນຂອງບໍລິສັດ ໂດຍສະເພາະແມ່ນຄວາມສ່ຽງຂອງການເກັບໜີ້ຄ່າກະແສໄຟຟ້າບໍ່ໄດ້ ຕາມແຜນການຂອງ ຜ-ຟຟລ.

3. ຄະນະກຳມະການກຳນົດຄ່າຕອບແທນ

ຄະນະກຳມະການ ກຳນົດຄ່າຕອບແທນ ໄດ້ຖືກແຕ່ງຕັ້ງຂຶ້ນໂດຍ ສະພາບໍລິຫານ ຜ-ຟຟລ ຕາມຂໍ້ຕົກລົງ ເລກທີ 0041/ຜ-ຟຟລ. ລົງວັນທີ: 06/01/2017, ປັດຈຸບັນແມ່ນຢູ່ໃນຂັ້ນຕອນກະກຽມການດຳເນີນງານຕາມ ພາລະບົດບາດ.

4. ຄະນະກຳມະການຄັດເລືອກ

ໃນການດຳເນີນງານ ໄຕມາດ 1 ປີ 2018 ຄະນະກຳມະການຄັດເລືອກ ໄດ້ຈັດກອງປະຊຸມ 2 ຄັ້ງ: ໃນວັນທີ 13 ກຸມພາ 2018 ແລະ ຄັ້ງວັນທີ 13 ມີນາ 2018 ໃນກອງປະຊຸມໄດ້ພິຈາລະນາໃນຫຼາຍບັນຫາ ແລະ ໄດ້ເຫັນດີ ເອກະພາບກັນ ດັ່ງນີ້:

1. ກອງປະຊຸມໄດ້ພິຈາລະນາຮັບຮອງເອົາພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບ ຂອງ ຄະນະ ກຳມະການຄັດເລືອກສະພາບໍລິຫານ ຂອງ ຜ-ຟຟລ.
2. ກອງປະຊຸມໄດ້ພິຈາລະນາຮັບຮອງເອົາລາຍຊື່ ສະມາຊິກສະພາບໍລິຫານ ຂອງ ຜ-ຟຟລ ຊຸດໃໝ່ ແທນ ສະມາຊິກສະພາບໍລິຫານ ຂອງ ຜ-ຟຟລ ຊຸດເກົ່າທີ່ຄົບອາຍຸການ.
3. ກອງປະຊຸມໄດ້ພິຈາລະນາປ່ຽນການແຕ່ງຕັ້ງກອງເລຂາຄະນະກຳມະການຄັດເລືອກ ຈາກ ຝ່າຍແຜນການ ຕາມຂໍ້ຕົກລົງເລກທີ 0042/ຜ-ຟຟລ ລົງວັນທີ 06/01/2017 ມາເປັນ ຝ່າຍບໍລິຫານງານສະໜັບສະໜູນ ອົງກອນ ເພື່ອໃຫ້ສອດຄ່ອງກັບພາລະບົດບາດ ແລະ ໜ້າທີ່ຕົວຈິງ.

5. ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

ໃນການດຳເນີນງານ ໄຕມາດ1 ປີ2018, ໂດຍອີງໃສ່ຂໍ້ມູນຜູ້ຖືຮຸ້ນຂອງ ແລະ ການດຳເນີນທຸລະກິດຂອງ ຜ-ຟຟລ ແມ່ນຍັງບໍ່ມີລາຍການທີ່ກ່ຽວພັນເກີດຂຶ້ນ, ພ້ອມດຽວກັນນີ້ ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ກໍ່ໄດ້ກະກຽມຈັດກອງປະຊຸມ ຂອງຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ທີ່ຄາດວ່າ ຈະຈັດຂຶ້ນໃນ ໄຕມາດ 2 ປີ 2018.

4.2 ຄະນະກຳມະການຂອງຄະນະອຳນວຍການໃຫຍ່.

1. ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້ຂາຍໄຟຟ້າ.

ໃນການດຳເນີນງານ ໄຕມາດ 1 ປີ 2018 ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້-ຂາຍໄຟຟ້າໄດ້ດຳເນີນວຽກງານ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

- ສືບຕໍ່ເຈລະຈາສັນຍາສຳປະທານຂອງໂຄງການເຂື່ອນໄຟຟ້ານ້ຳຄານ 2 ແລະ ຫ້ວຍລຳພັນໃຫຍ່ ລະຫວ່າງ ຜ-ຟຟລ ແລະ ກົມທຸລະກິດພະລັງງານ (ກະຊວງພະລັງງານ ແລະ ບໍ່ແຮ່).
- ວັນທີ 26 ມີນາ 2018 ໄດ້ສຳເລັດການລົງນາມສັນຍາໂອນຮຸ້ນໂຄງການເຂື່ອນໄຟຟ້ານ້ຳແບ່ງ ລະຫວ່າງ ຟຟລ ແລະ ຜ-ຟຟລ.
- ວັນທີ 26 ມີນາ 2018 ໄດ້ສຳເລັດການລົງນາມສັນຍາໂອນຮຸ້ນໂຄງການເຂື່ອນໄຟຟ້ານ້ຳລອງ ລະຫວ່າງ ຟຟລ ແລະ ຜ-ຟຟລ.

2. ຄະນະກຳມະການຈັດຊື້ແລະ ສະໜອງວັດສະດຸອຸປະກອນ(ຄຈຊ).

ໃນການດຳເນີນງານ ໄຕມາດ 1 ປີ 2018 ຄະນະກຳມະການ ຈັດຊື້ ຜ-ຟຟລ ໄດ້ເປີດກອງປະຊຸມປຶກສາຫາລືວຽກງານຈັດຊື້-ວ່າຈ້າງ ຈຳນວນ: 01 ຄັ້ງ ແລະ ເປີດກອງປະຊຸມເຈລະຈາ-ປຶກສາຫາລື ກັບ ຜູ້ສະໜອງ/ຜູ້ຮັບເໝົາ ຈົນກ້າວໄປສູ່ການເຊັນສັນຍາ ຈຳນວນ 10 ໂຄງການ, ໂດຍແບ່ງອອກເປັນ 03 ພາກ ດັ່ງນີ້:

- ພາກ ການປະຕິບັດວຽກ (Works) ຈຳນວນ:04 ໂຄງການ
- ພາກ ຈັດຊື້ສິນຄ້າ (Goods) ຈຳນວນ:03 ໂຄງການ
- ພາກ ສະໜອງການບໍລິການ (Service) ຈຳນວນ:03 ໂຄງການ

3. ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍແລະ ປະຕິບັດວິໄນ (ຄນຍວ).

ໃນການດຳເນີນງານ ໄຕມາດ 1 ປີ 201 8, ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ ແມ່ນບໍ່ໄດ້ມີການເຄື່ອນໄຫວຫຍັງເທື່ອ

5. ການດຳເນີນທຸລະກິດແລະ ຜົນການດຳເນີນງານ

ນັບແຕ່ປີ 2010 ເຖິງປັດຈຸບັນ ຜ-ຟຟລ ໄດ້ດຳເນີນທຸລະກິດເປັນເວລາແປດປີແລ້ວ ໃນການຜະລິດກະແສໄຟຟ້າ ເພື່ອຂາຍຍົກໃຫ້ ຟຟລ, ໃນຂະນະດຽວກັນ ຜ-ຟຟລ ຕ້ອງໄດ້ປັບປຸງການຄຸ້ມຄອງບໍລິຫານພາຍໃນ ໃຫ້ສອດຄ່ອງກັບກົດລະບຽບ ແລະ ກົດໝາຍຕ່າງໆ ທີ່ກ່ຽວກັບບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫລາດຫລັກຊັບລາວ ເພື່ອຮອງຮັບການຂະຫຍາຍຕົວຂອງວຽກງານຂອງ ຜ-ຟຟລ ແລະ ເພື່ອສ້າງພາບພົດ, ຄວາມໝັ້ນໃຈຂອງນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ. ດັ່ງນັ້ນ, ຜົນການດຳເນີນທຸລະກິດໃນໄຕມາດນີ້ ຈຶ່ງສັງລວມໄດ້ດັ່ງນີ້:

5.1. ການຜະລິດ

ໃນໄຕມາດ1 ປີ 2018 ຜ-ຟຟລ ມີເຂື່ອນທີ່ດຳເນີນການ ຜະລິດກະແສໄຟຟ້າທັງໝົດ 10 ເຂື່ອນ, ມີກຳລັງຕິດຕັ້ງ ທັງໝົດ 1.131 MW. ເນື່ອງຈາກທຳມະຊາດໄດ້ເອື້ອອຳນວຍໃນການຜະລິດກະແສໄຟຟ້າ, ເຮັດໃຫ້ການຜະລິດບັນລຸຕົວເລກ 458,99 GWh, ເທົ່າກັບ 101,02% ຂອງແຜນການ.

5.2. ລາຍຮັບ

ລາຍຮັບສ່ວນໃຫຍ່ ຂອງ ຜ-ຟຟລ ແມ່ນລາຍຮັບຈາກການຈຳໜ່າຍກະແສໄຟຟ້າໃຫ້ ຟຟລ, ຊຶ່ງລາຍຮັບ ໃນ ໄຕມາດ 1 ປີ 2018 ນີ້, ຜ-ຟຟລ ສາມາດສ້າງລາຍຮັບໄດ້ 228.989 ລ້ານກີບ, ລົ້ນແຜນການ 6,07% ໃນນີ້ລາຍ ຮັບຈາກການຈຳໜ່າຍກະແສໄຟ 217.588 ລ້ານກີບ ເທົ່າກັບ 95,02% ຂອງ ລາຍຮັບທັງໝົດ ແລະ ລາຍຮັບອື່ນໆ 4,98% ຂອງ ລາຍຮັບທັງໝົດ.

5.3. ລາຍຈ່າຍ

ລາຍຈ່າຍໃນການດຳເນີນທຸລະກິດ ຂອງ ຜ-ຟຟລ ໃນໄຕມາດ 1 ປີ 2018 ເປັນເງິນທັງໝົດ 352.564 ລ້ານກີບ ເທົ່າກັບ 153,97% ຂອງ ລາຍຮັບທັງໝົດ ເນື່ອງຈາກການເພີ່ມຂຶ້ນຂອງພາກລາຍຈ່າຍການເງິນ, ລາຍຈ່າຍໃນການດຳ ເນີນງານ ແລະ ລາຍຈ່າຍຕົ້ນທຶນໃນການຂາຍ ໃນນີ້:

ລາຍຈ່າຍໃນການດຳເນີນທຸລະກິດໃນໄຕມາດ1 ປີ 2018			
ລ/ດ	**ລາຍການລະອຽດ**	**ຈຳນວນ ລ້ານກີບ**	**(%) ທຽບໃສ່ລາຍຮັບທັງໝົດ**
1	ຕົ້ນທຶນໃນການຂາຍ	118.043	51,55%
2	ລາຍຈ່າຍທາງການເງິນ	144.160	22,12%
3	ຂາດທຶນອັດຕາແລກປ່ຽນເງິນຕາຕ່າງປະເທດ	39.718	17,34%
4	ລາຍຈ່າຍໃນການດຳເນີນງານ	50.643	62,95%
ລວມທັງໝົດ		**352.564**	**153,96%**

5.4. ກຳໄລໃນການດຳເນີນທຸລະກິດ.

ໃນໄຕມາດ 1 ປີ 2018 ຈະມີກຳໄລຈາກ 2 ພາກຄື:

1. ກຳໄລສຸດທິ ຈາກການດຳເນີນທຸລະກິດຂອງ ຜ-ຟຟລ ທີ່ມີລາຍຮັບ ແລະ ລາຍຈ່າຍຂ້າງເທິງນີ້, ເຫັນວ່າ ຜ-ຟຟລ ຂາດຖຸນຢູ່ 123.575 ລ້ານກີບ.
2. ກຳໄລສຸດທິ ຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນເປັນເງິນທັງໝົດ 157.134 ລ້ານກີບ. ລວມກຳໄລໃນ ໄຕມາດ 1 ປີ 2018 ທັງໝົດ 33.559 ລ້ານກີບ.

5.5. ການມອບພັນທະ

ຜ-ຟຟລ ແມ່ນ ບໍລິສັດມະຫາຊົນ ທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ, ໂດຍທາງດ້ານນິຕິກຳ ຜ-ຟຟລ ກໍ່ແມ່ນບໍລິສັດໜຶ່ງ ທີ່ດຳເນີນທຸລະກິດ ພາຍໃຕ້ກົດໝາຍ ຂອງ ສປປລາວ; ດັ່ງນັ້ນ ການມອບພັນທະກໍ່ ເປັນອີກວຽກໜຶ່ງ ທີ່ ຜ-ຟຟລ ໄດ້ເອົາໃຈໃສ່ປະຕິບັດຢ່າງຕັ້ງໜ້າ. ພັນທະທີ່ ຜ-ຟຟລ ມອບໃຫ້ລັດ, ປະກອບດ້ວຍ ຄ່າພາກຫລວງ, ອາກອນເງິນເດືອນ-ເງິນບຳເນັດ, ອາກອນມູນຄ່າເພີ່ມ ແລະ ອາກອນເບ້ຍປະຊຸມ, ໃນໄຕມາດ 1 ປີ 2018 ລວມມອບທັງໝົດ 3.479 ລ້ານກີບ ໃນນີ້ມີ:

ລຳດັບ	ລາຍການລະອຽດ	ໜ່ວຍ: ລ້ານກີບ
1	ຄ່າພາກຫລວງ	1.554
2	ອາກອນເງິນເດືອນ / ເງິນບຳເນັດ	1.104
3	ອາກອນມູນຄ່າເພີ່ມ	758
4	ອາກອນເບ້ຍປະຊຸມ	63
ລວມທັງໝົດ		3.479

ເອກະສານລາຍງານການເງິນ ໄຕມາດ 1
31 ມີນາ 2018

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ເອກະສານລາຍງານການເງິນລວມປະຈຳໄຕມາດ 1 (ກ່ອນກວດສອບ)

ວັນທີ 31 ມີນາ 2018

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ໃບລາຍງານຖານະການເງິນ (ກ່ອນກວດສອບ)

		ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	ບົດອະທິບາຍ	31 ມີນາ 2018 (ກ່ອນກວດສອບ)	31 ທັນວາ 2017	31 ມີນາ 2018 (ກ່ອນກວດສອບ)	31 ທັນວາ 2017
				(ລ້ານກີບ)	
ຊັບສິນ					
ເງິນລົງທຶນ ໃນບໍລິສັດລູກ	*4*	-	-	82.760	82.760
ເງິນລົງທຶນ ໃນວິສາຫະກິດ ຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	5	2.884.577	2.606.394	2.884.577	2.606.394
ເງິນລົງທຶນຈ່າຍລ່ວງໜ້າ ສຳລັບຊັບສິນຢູ່ພາຍໃຕ້					
ການສຳປະທານ ແລະ ເງິນລົງທຶນ	*6,13*	4.415.471	4.436.159	5.172.237	5.101.121
ເງິນຈ່າຍລ່ວງໜ້າສຳລັບສັນຍາແລກປ່ຽນ					
ອັດຕາດອກເບ້ຍ Collar	*10*	36.058	36.058	36.058	36.058
ຊັບສິນຢູ່ພາຍໃຕ້ການສຳປະທານ	*7*	9.707.577	9.790.198	9.305.435	9.408.829
ເງິນຝາກໄລຍະຍາວ		160.847	66.334	160.847	66.334
ໜີ້ຕ້ອງຮັບສັນຍາແລກປ່ຽນ Swap	*10*	73.131	-	73.131	-
ຊັບສິນທີ່ບໍ່ໝຸນວຽນອື່ນໆ		254.843	190.218	5.295	6.538
ລວມຊັບສິນບໍ່ໝຸນວຽນ		**17.532.504**	**17.125.361**	**17.720.340**	**17.308.034**
ເງິນສົດ ແລະ ທຽບເທົ່າ ເງິນສົດ		634.874	756.738	477.530	678.322
ເງິນລົງທຶນໄລຍະສັ້ນ		955.301	955.301	955.301	955.301
ເງິນໃຫ້ກູ້ໄລຍະສັ້ນກັບພາກສ່ວນທີ່ກ່ຽວຂ້ອງ	*13*	463.392	463.392	463.392	463.392
ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ	*13*	406.224	149.452	404.447	144.598
ສ່ວນທີ່ເຖິງກຳນົດຈ່າຍລ່ວງໜ້າສຳລັບ					
ສັນຍາແລກປ່ຽນອັດຕາດອກເບ້ຍ Collar	*10*	14.581	14.581	14.581	14.581
ອາໄຫ່ ແລະ ເຄື່ອງໃນສາງ		4.530	4.458	4.530	4.458
ຊັບສິນໝຸນວຽນອື່ນໆ		67.924	149.910	39.314	35.594
ລວມຊັບສິນໝຸນວຽນ		**2.546.826**	**2.493.832**	**2.359.095**	**2.296.246**
ລວມຍອດຊັບສິນ		**20.079.330**	**19.619.193**	**20.079.435**	**19.604.280**

ທ່ານນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພຶດສະພາ 2018

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 10 ພຶດສະພາ 2018

ໃບລາຍງານຖານະການເງິນ (ກ່ອນກວດສອບ)

	ຍົກຍ້ອງ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ມີນາ 2018 (ກ່ອນກວດສອບ)	31 ທັນວາ 2017	31 ມີນາ 2018 (ກ່ອນກວດສອບ)	31 ທັນວາ 2017
				(ລ້ານກີບ)	
ທຶນຂອງຜູ້ຖືຮຸ້ນ					
ທຶນຈົດທະບຽນ		6.717.215	6.717.215	6.717.215	6.717.215
ສ່ວນເພີ່ມມູນຄ່າຮຸ້ນ		985.621	985.621	985.621	985.621
ຄັງສະສົມຕາມລະບຽບການ		463.944	463.944	463.944	463.944
ຜົນຕ່າງຈາກການແປງຄ່າ ເອກະສານລາຍງານການເງິນ		2.375	2.302	2.375	2.302
ກຳໄລສະສົມ		1.074.203	1.040.000	1.076.006	1.042.447
ສ່ວນຂອງຜູ້ຖືຮຸ້ນບໍລິສັດ		9.243.358	9.209.082	9.245.161	9.211.529
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		(228)	(263)	-	-
ລວມຍອດທຶນຂອງຜູ້ຖືຮຸ້ນທັງໝົດ		**9.243.130**	**9.208.819**	**9.245.161**	**9.211.529**
ໜີ້ສິນ					
ເງິນກູ້ຢືມໄລຍະຍາວ	*8*	4.347.509	4.206.348	4.347.509	4.206.348
ຮຸ້ນກູ້	*9*	4.265.113	4.152.882	4.265.113	4.152.882
ໜີ້ຕ້ອງສິ່ງສັນຍາແລກປ່ຽນ Swap	*10*	-	3.856	-	3.856
ລວມໜີ້ສິນບໍ່ໝຸນວຽນ		**8.612.622**	**8.363.086**	**8.612.622**	**8.363.086**
ເງິນກູ້ຢືມໄລຍະສັ້ນ	*8*	911.199	870.573	911.199	870.573
ເງິນກູ້ຢືມໄລຍະຍາວ ເຖິງກຳນົດ ຈັດເປັນໄລຍະສັ້ນ	*8*	641.628	529.912	641.628	529.912
ໜີ້ຕ້ອງສິ່ງຜູ້ສະໜອງ ແລະ ອື່ນໆ		498.624	535.079	497.475	517.911
ໜີ້ຕ້ອງສິ່ງສຳລັບຊັບສົມບັດທີ່ຢູ່ພາຍໃຕ້ການສຳປະທານ		-	-	-	-
ໜີ້ຕ້ອງສິ່ງ ອາກອນກຳໄລ		-	-	-	-
ລາຍຈ່າຍຄ້າງຈ່າຍ		171.631	111.222	170.854	110.767
ໜີ້ສິນໝຸນວຽນອື່ນໆ		496	502	496	502
ລວມຍອດໜີ້ສິນໝຸນວຽນ		**2.223.578**	**2.047.288**	**2.221.652**	**2.029.665**
ລວມຍອດໜີ້ສິນ		**10.836.200**	**10.410.374**	**10.834.274**	**10.392.751**
ລວມຍອດທຶນຕົນເອງ ແລະ ໜີ້ສິນ		**20.079.330**	**19.619.193**	**20.079.435**	**19.604.280**

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພຶດສະພາ 2018

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 10 ພຶດສະພາ 2018

	ບົດອະທິບາຍ	ເອກະສານລາຍງານການເງິນ ແບບລວມ ສຳລັບສິ້ນສຸດງວດ 31 ມີນາ 2018	2017	ເອກະສານລາຍງານການເງິນ ແບບແຍກ ສຳລັບສິ້ນສຸດງວດ 31 ມີນາ 2018	2017
			(ລ້ານກີບ)		
ສືບຕໍ່ດຳເນີນການ					
ຂາຍ	*13*	221.465	243.698	217.588	243.194
ຕົ້ນທຶນໃນການຂາຍ		(120.204)	(113.861)	(118.043)	(113.694)
ກຳໄລລວມ		101.261	129.837	99.545	129.500
ລາຍຮັບອື່ນໆ		11.401	5.381	11.401	5.381
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ		(51.231)	(22.214)	(50.643)	(21.680)
ກຳໄລ/(ຂາດທຶນ) ຈາກອັດຕາແລກປ່ຽນ		(40.167)	(18.492)	(39.718)	(18.492)
ກຳໄລຈາກຮຸ້ນທີ່ລົງທຶນ ໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ	*5*	157.134	15.919	157.134	15.919
ກຳໄລຈາກການດຳເນີນງານ		**178.398**	**110.431**	**177.719**	**110.628**
ລາຍຈ່າຍທາງການເງິນ		(144.160)	(90.802)	(144.160)	(90.802)
ກຳໄລກ່ອນອາກອນກຳໄລ		**34.238**	**19.629**	**33.559**	**19.826**
ອາກອນກຳໄລ		-	(3.660)	-	(3.660)
ກຳໄລໃນຮອບເວລາ		**34.238**	**15.969**	**33.559**	**16.166**
ສ່ວນຂອງກຳໄລທີ່ເປັນຂອງ					
ສ່ວນຂອງ ບໍລິສັດແມ່		34.203	15.969	33.559	16.166
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		35	-	-	-
ກຳໄລໃນຮອບເວລາ		34.238	15.969	33.559	16.166
ກຳໄລຕໍ່ຮຸ້ນ					
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	*11*	20,37	9,51	19,98	9,63

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພຶດສະພາ 2018

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 10 ພຶດສະພາ 2018

		ເອກະສານລາຍງານການເງິນແບບລວມ ສ່ວນຂອງຜູ້ຖືຮຸ້ນບໍລິສັດ							
	ບົດອະທິບາຍ	ທຶນຈົດ ທະບຽນ	ສ່ວນເພີ່ມ ມູນຄ່າຮຸ້ນ	ຄັງສະສົມຕາມ ລະບຽບການ	ຜົນຕ່າງຈາກການ ແປງຄ່າເອກະສານ ລາຍງານການເງິນ	ກຳໄລ ສະສົມ	ລວມ	ສ່ວນໄດ້ເສຍ ທີ່ບໍ່ມີອຳນາດ ໃນການຄວບຄຸມ	ລວມຍອດຂອງ ຜູ້ຖືຮຸ້ນທັງໝົດ
					(ລ້ານກີບ)				
ສຳລັບຮອບເວລາສາມເດືອນ ສິ້ນສຸດ 31 ມີນາ 2017									
ຍອດເຫຼືອໃນວັນທີ 1 ມັງກອນ 2017		6.717.215	985.621	416.729	(1.342)	1.042.217	9.160.440	-	9.160.440
ກຳໄລໃນຮອບເວລາ		-	-	-	-	15.969	15.969	-	15.969
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	*4*	-	-	-	51	-	51	-	51
ຍອດເຫຼືອໃນວັນທີ 31 ມີນາ 2017		**6.717.215**	**985.621**	**416.729**	**(1.291)**	**1.058.186**	**9.176.460**	**-**	**9.176.460**
ສຳລັບຮອບເວລາສາມເດືອນ ສິ້ນສຸດ 31 ມີນາ 2018									
ຍອດເຫຼືອໃນວັນທີ 1 ມັງກອນ 2018		6.717.215	985.621	463.944	2.302	1.040.000	9.209.082	(263)	9.208.819
ກຳໄລໃນຮອບເວລາ		-	-	-	-	34.203	34.203	35	34.238
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	*4*	-	-	-	73	-	73	-	73
ຍອດເຫຼືອໃນວັນທີ 31 ມີນາ 2018		**6.717.215**	**985.621**	**463.944**	**2.375**	**1.074.203**	**9.243.358**	**(228)**	**9.243.130**

	ບົດອະທິບາຍ	ທຶນຈົດທະບຽນ	ສ່ວນເພີ່ມມູນຄ່າຮຸ້ນ	ຖັງສະສົມຕາມລະບຽບການ	ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	ກຳໄລສະສົມ	ລວມຍອດຜູ້ຖືຮຸ້ນ
				(ລ້ານກີບ)			
ສຳລັບຮອບເວລາສາມເດືອນ ສິ້ນສຸດ 31 ມີນາ 2017							
ຍອດເຫຼືອໃນວັນທີ 1 ມັງກອນ 2017		6.717.215	985.621	416.729	(1.342)	1.070.927	9.189.150
ກຳໄລໃນຮອບເວລາ		-	-	-	-	16.166	16.166
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	*4*	-	-	-	51	-	51
ຍອດເຫຼືອໃນວັນທີ 31 ມີນາ 2017		**6.717.215**	**985.621**	**416.729**	**(1.291)**	**1.087.093**	**9.205.367**
ສຳລັບຮອບເວລາສາມເດືອນ ສິ້ນສຸດ 31 ມີນາ 2018							
ຍອດເຫຼືອໃນວັນທີ 1 ມັງກອນ 2018		6.717.215	985.621	463.944	2.302	1.042.447	9.211.529
ກຳໄລໃນຮອບເວລາ		-	-	-	-	33.559	33.559
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	*4*	-	-	-	73	-	73
ຍອດເຫຼືອໃນວັນທີ 31 ມີນາ 2018		**6.717.215**	**985.621**	**463.944**	**2.375**	**1.076.006**	**9.245.161**

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພຶດສະພາ 2018

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 10 ພຶດສະພາ 2018

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ໃບລາຍງານກະແສເງິນສົດ

	ຍົດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ ສຳລັບສິ້ນສຸດງວດ 31 ມີນາ		ເອກະສານລາຍງານການເງິນ ແບບແຍກ ສຳລັບສິ້ນສຸດງວດ 31 ມີນາ	
		2018	2017	2018	2017
			(ລ້ານກີບ)		
ກະແສເງິນສົດຈາກກິດຈະກຳການດຳເນີນງານ					
ກຳໄລສຳລັບໃນຮອບເວລາ		34.238	15.969	33.559	16.166
ປັບປຸງ:					
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ	*6*	105.909	103.350	105.672	103.100
ລາຍຈ່າຍການເງິນ		144.160	90.802	144.160	90.802
(ກຳໄລ)/ຂາດທຶນ ຈາກອັດຕາແລກປ່ຽນ		40.278	35.798	40.278	35.798
ກຳໄລ ຈາກເງິນລົງທຶນໃນສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ	*4*	(157.134)	(15.919)	(157.134)	(15.919)
ລາຍຈ່າຍອາກອນກຳໄລ		-	3.660	-	3.660
		167.451	**233.660**	**166.535**	**233.607**
ການປ່ຽນແປງ:					
ຊັບສິນທີ່ບໍ່ໝຸນວຽນອື່ນໆ		(64.625)	(77.443)	1.243	(118.611)
ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(209.320)	(234.337)	(212.397)	(230.131)
ອາໄຫ່ ເຄື່ອງໃນສາງ		(72)	406	(72)	406
ຊັບສິນໝຸນວຽນອື່ນໆ		81.986	(25.936)	(3.720)	2.618
ໜີ້ຕ້ອງສົ່ງຜູ້ສະໜອງການຄ້າ ແລະ ອື່ນໆ		(23.304)	(38.558)	(7.285)	(40.178)
ລາຍຈ່າຍຄ້າງຈ່າຍ		17.781	(48.008)	17.458	(48.313)
ໜີ້ສິນໝຸນວຽນອື່ນໆ		(6)	(31)	(6)	(31)
ເງິນສົດ ຈາກກິດຈະກຳການດຳເນີນງານ		(30.109)	(190.247)	(38.244)	(200.633)
ອາກອນກຳໄລທີ່ໄດ້ຈ່າຍ		-	(15.386)	-	(15.386)
ເງິນສົດ ສຸດທິ ຈາກກິດຈະກຳການດຳເນີນງານ		**(30.109)**	**(205.633)**	**(38.244)**	**(216.019)**
ກະແສເງິນສົດ ຈາກກິດຈະກຳການລົງທຶນ					
ເງິນຈ່າຍລ່ວງໜ້າສຳລັບຊັບສິນ ຢູ່ພາຍໃຕ້ ການສຳປະທານ ແລະ ເງິນລົງທຶນ		-	-	(91.803)	-
ເງິນລົງທຶນໃນອິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	*6*	(321.382)	(1.634)	(321.382)	(1.634)
ຊື້ຊັບສິນພາຍໃຕ້ສັນຍາສຳປະທານ		(36.439)	(504)	(15.429)	(504)
ຮັບເງິນປັນຜົນຈາກເງິນລົງທຶນໃນອິສາຫະກິດ ຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	*6*	176.995	-	176.995	-
ຈ່າຍເງິນສົດສຳລັບການລົງທຶນໄລຍະຍາວ		(94.513)	-	(94.513)	-
ເງິນສົດ ສຸດທິ ທີ່ໃຊ້ໃນກິດຈະກຳການລົງທຶນ		**(275.339)**	**(2.138)**	**(346.132)**	**(2.138)**

ໃບລາຍງານກະແສເງິນສົດ

	ຍົດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ ສຳລັບສິ້ນສຸດງວດ 31 ມີນາ		ເອກະສານລາຍງານການເງິນ ແບບແຍກ ສຳລັບສິ້ນສຸດງວດ 31 ມີນາ	
		2018	2017	2018	2017
			(ລ້ານກີບ)		
ກະແສເງິນສົດຈາກ ກິດຈະກຳການເງິນ					
ລາຍຈ່າຍທາງການເງິນ		(101.589)	(84.109)	(101.589)	(84.109)
ຄ່າໃຊ້ຈ່າຍໃນການອອກຮຸ້ນກູ້		(3.312)	-	(3.312)	-
ຮັບເງິນສົດຈາກເງິນກູ້ຢືມໄລຍະສັ້ນ	*13*	39.570	-	39.570	-
ຮັບເງິນສົດຈາກເງິນກູ້ຢືມໄລຍະຍາວ	*13*	332.440	-	332.440	-
ຊຳລະເງິນກູ້ຢືມໄລຍະຍາວ	*13*	(83.525)	(82.574)	(83.525)	(82.574)
ເງິນສົດສຸດທິ ໃຊ້ໃນກິດຈະກຳການເງິນ		**183.584**	**(166.683)**	**183.584**	**(166.683)**
ການເພີ່ມຂຶ້ນ/(ຫຼຸດລົງ) ສຸດທິ ເງິນສົດ ແລະ ທຽບເທົ່າເງິນສົດ		(121.864)	(374.454)	(200.792)	(384.840)
ຜົນກະທົບຈາກອັດຕາແລກປ່ຽນ ກັບ ຍອດເຫຼືອຂອງ ເງິນຕາຕ່າງປະເທດໃນມື້ສິ້ນງວດ		-	8.517	-	8.517
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນງວດ		756.738	2.249.635	678.322	2.235.280
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ໃນມື້ສິ້ນງວດ		**634.874**	**1.883.698**	**477.530**	**1.858.957**
ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ					
ເງິນປັນຜົນຕ້ອງຮັບ		23.412	124.044	23.412	124.044
ໜີ້ຕ້ອງສິ່ງ ຊື້ຊັບສິນບັດຄົງທີ ພາຍໃຕ້ການສຳປະທານ		414.279	73.904	414.279	73.904
ໜີ້ຕ້ອງສິ່ງເງິນປັນຜົນ		90.480	-	90.480	-
ຊຳລະສະສາງບັນຊີໜີ້ຕ້ອງສິ່ງຊື້ຊັບສິນພາຍໃຕ້ການສຳປະທານ ກັບເງິນກູ້ຢືມໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ		-	3.995.884	-	3.995.884
ໜີ້ຕ້ອງຮັບຈາກການຫຼຸດລົງຂອງເງິນລົງທຶນ ຈ່າຍລ່ວງໜ້າ		23.976	-	23.976	-

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພຶດສະພາ 2018

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 10 ພຶດສະພາ 2018

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ບົດອະທິບາຍຊ້ອນທ້າຍໂດຍຫຍໍ້ ປະກອບເອກະສານລາຍງານການເງິນລວມ

ສຳລັບຮອບເວລາລາຍງານສາມເດືອນ ສິ້ນສຸດ ວັນທີ 31 ມີນາ 2018 (ກ່ອນກວດສອບ)

ບົດອະທິບາຍ		ເນື້ອໃນ
ພື້ນຖານການກະກຽມ		
1		ຂໍ້ມູນທົ່ວໄປ
2		ພື້ນຖານການບັນຊີ
ຊັບສິນ		
3		ເງິນລົງທຶນ ໃນວິສາຫະກິດ ຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ
4		ເງິນລົງທຶນຈ່າຍລ່ວງໜ້າ ສຳລັບຊັບສິນພາຍໃຕ້ສັນຍາສຳປະທານ ແລະເງິນລົງທຶນ
5		ຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ
6		ໜີ້ຕ້ອງຮັບຈາກລູກໜີ້ການຄ້າ ແລະ ໜີ້ຕ້ອງຮັບອື່ນໆ
ໜີ້ສິນ		
7		ໜີ້ສິນທີ່ມີພາລະດອກເບ້ຍ
8		ຮຸ້ນກູ້
9		ອານຸພັນທາງການເງິນ
10		ລາຍຈ່າຍຄ້າງຈ່າຍ
ຂໍ້ມູນອື່ນໆ		
11		ກຳໄລພື້ນຖານຕໍ່ຮຸ້ນ
12		ພາກສ່ວນທີ່ກ່ຽວຂ້ອງ
13		ເຫດການທີ່ເກີດຂຶ້ນພາຍຫຼັງການລາຍງານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ບົດອະທິບາຍຊ້ອນທ້າຍໂດຍຫຍໍ້ ປະກອບເອກະສານລາຍງານການເງິນລວມ
ສຳລັບຮອບເວລາລາຍງານສາມເດືອນ ສິ້ນສຸດ ວັນທີ 31 ມີນາ 2018 (ກ່ອນກວດສອບ)

1 ການລາຍງານກິດຈະການ

ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ ("ກຸ່ມບໍລິສັດ" ຫຼື "ບໍລິສັດ") ເປັນ ບໍລິສັດມະຫາຊົນ ເຊິ່ງໄດ້ຈົດທະບຽນເຂົ້າ ໃນຕະຫຼາດ ຫຼັກຊັບ ແຫ່ງ ສປປ ລາວ ("ຕລຊລ") ວັນທີ 11 ມັງກອນ 2011 ແລະ ຖືກຄຸ້ມຄອງໂດຍ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປລາວ"). ກຸ່ມບໍລິສັດ ໄດ້ຖືກສ້າງຕັ້ງຂຶ້ນ ແລະ ຈົດທະບຽນ ກັບ ກະຊວງ ອຸດສະຫະ ກຳ ແລະ ການຄ້າ ໃນວັນທີ 15 ທັນວາ 2010. ກຸ່ມບໍລິສັດໃນເຄືອຂອງ ລັດວິສາຫະກິດໄຟຟ້າລາວ ("ຟຟລ") ເຊິ່ງຖືຮຸ້ນ 75%.

ການຈົດທະບຽນຂອງກຸ່ມບໍລິສັດໄດ້ລິເລີ່ມໂດຍ ຟຟລ ເຊື່ອມຕໍ່ກັບການປັບໂຄງສ້າງ ຂອງທຸລະກິດ ພະລັງງານຂອງ ຟຟລ ໂດຍການໂອນຊັບສິນການຜະລິດທີ່ມີຢູ່ ແລະ ສິດທິສະເພາະດ້ານໃດດ້ານໜຶ່ງ ແລະ ພັນທະໃຫ້ກຸ່ມບໍລິສັດ ອີງຕາມສຳນັກ ງານນາຍົກລັດຖະມົນຕີ ("ສນຍ") ສະບັບເລກທີ 180 ລົງວັນທີ 13 ທັນວາ 2010. ສນຍ ໄດ້ອະນຸມັດໃຫ້ ຟຟລ ຂາຍຮຸ້ນ ຂອງຕົນໃນໂຄງການໂຮງງານໄຟຟ້າເອກະລາດ ("IPP") ໃຫ້ກັບກຸ່ມບໍລິສັດ.

ໃນວັນທີ 15 ທັນວາ 2010, ຟຟລ ໄດ້ໂອນຊັບສິນການຜະລິດທີ່ມີຢູ່ ແລະ ໜີ້ສິນທີ່ກ່ຽວຂ້ອງຂອງ 7 ເຂື່ອນໄຟຟ້ານ້ຳຕົກ , ລວມມີ ເຂື່ອນນ້ຳງື່ມ 1, ເຂື່ອນນ້ຳເລິກ, ເຂື່ອນນ້ຳມັງ 3, ເຂື່ອນນ້ຳຊອງ, ເຂື່ອນເຊເຊັດ 1, ເຂື່ອນເຊເຊັດ 2, ເຂື່ອນເຊ ລະບໍ, ຕາມມູນຄ່າສຸດທິ ໃນວັນທີ 20 ຕຸລາ 2010, ໃຫ້ກຸ່ມບໍລິສັດ ເປັນຈຳນວນເງິນ 2.605.792 ລ້ານກີບ. ຟຟລ ຈະສືບຕໍ່ກິດຈະກຳຂອງຕົນຢູ່ໃນລະບົບສາຍສົ່ງ ແລະ ການແຜ່ກະຈາຍຂອງໄຟຟ້າທີ່ຜະລິດໂດຍທີ່ມີຢູ່ຊັບສິນການຜະລິດ ໄປເຖິງຜູ້ຊົມໃຊ້, ຕັ້ງແຕ່ 15 ທັນວາ 2010, ກຸ່ມບໍລິສັດໄດ້ເລີ່ມການດຳເນີນງານການຜະລິດໄຟຟ້າ ຂອງຕົນສ່ວນໃຫຍ່ ແມ່ນຂຶ້ນຢູ່ກັບ ຊັບສິນການໂອນຍ້າຍ ດັ່ງກ່າວຈະສະໜອງໄຟຟ້າທີ່ຜະລິດ ກັບຄືນໄປໃຫ້ ຟຟລ ອີງຕາມຂໍ້ກຳນົດ ແລະ ເງື່ອນໄຂ ທີ່ລະບຸໄວ້ໃນ ສັນຍາ ຊື້ຂາຍພະລັງງານ ("PPA").

ນອກຈາກນັ້ນ, ກຸ່ມບໍລິສັດໄດ້ສືບຕໍ່ຊື້ໂຄງການພະລັງງານ ແລະ ສ້າງຕັ້ງບໍລິສັດຮ່ວມທຶນໃໝ່ກັບຄູ່ສັນຍາທີ່ກ່ຽວຂ້ອງ ແລະ ຟຟລ.

ທີ່ຕັ້ງສຳນັກງານຂອງກຸ່ມບໍລິສັດ ຕັ້ງຢູ່ຊັ້ນ 7, ອາຄານສຳນັກງານໃຫຍ່ຂອງ ຟຟລ, ຖະໜົນ ມິດຕະພາບລາວໄທ, ບ້ານທົ່ງ ກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໄປສະນີ 2392, ສປປ ລາວ.

ເອກະສານລາຍງານການເງິນລວມປະຈຳໄຕມາດ 1 ໄດ້ຮັບອະນຸມັດໃຫ້ອອກ ໂດຍຄະນະກຳມະການຜູ້ບໍລິຫານ ວັນທີ 10 ພຶດສະພາ 2018.

2 ພື້ນຖານການບັນຊີ

ເອກະສານລາຍງານການເງິນລວມປະຈຳໄຕມາດ ໄດ້ສ້າງຂຶ້ນຕາມນະໂຍບາຍການບັນຊີຂອງກຸ່ມບໍລິສັດ ຕາມທີ່ໄດ້ອະທິບາຍລະອຽດໃນໃບລາຍງານທາງການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2017. ຂໍ້ມູນທາງການເງິນເບື້ອງຕົ້ນ (ຕົວຢ່າງ ໃບສະຫຼຸບຊັບສິນບັດ,ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດ ແລະ ລາຍງານສ່ວນປ່ຽນແປງທຶນຕົນເອງຂອງຜູ້ຖືຮຸ້ນ) ສ້າງຂຶ້ນຢ່າງເຕັມຮູບແບບ. ສ່ວນບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ໃນຮູບແບບໂດຍຫຍໍ້.

ເອກະສານລາຍງານການເງິນປະຈຳໄຕມາດ ຄວນຈະອ່ານຄຸ່ກັບໃບລາຍງານທາງການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2017.

ຄ່າໃຊ້ຈ່າຍທີ່ເກີດຂຶ້ນບໍ່ສະໝ່ຳສະເໝີ ໃນລະຫວ່າງປີ ການເງິນທີ່ຄາດວ່າ ຫຼື ຖ້າການຕັດບັນຊີການລາຍງານຊື່ວຄາວເທົ່ານັ້ນ ຖ້າມັນເໝາະສົມທີ່ຄາດວ່າຈະມີ ຫຼື ເລື່ອນການໃຊ້ຈ່າຍດັ່ງກ່າວໃນຊ່ວງທ້າຍປີທາງການເງິນ.

ໃນ ສປປ ລາວ ຍັງບໍ່ທັນໄດ້ມີການອາງມາດຕະຖານບັນຊີ ("LAS"). LAS ກຳລັງມີການພັດທະນາພາຍໃຕ້ກົມບັນຊີ ແລະ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ (LCPAA). ໃນປັດຈຸບັນ, ບັນດາບໍລິສັດໄດ້ນຳໃຊ້ປຶ້ມຄູ່ມືກ່ຽວກັບ ລະບຽບວິທີປະຕິບັດດ້ານການບັນຊີທີ່ອາງອອກໂດຍ ກະຊວງການເງິນ. ປຶ້ມຄູ່ມືດັ່ງກ່າວ ໄດ້ອາງຂໍ້ແນະນຳ ຕາມພື້ນຖານເງິນຄ້າງຮັບ - ຄ້າງຈ່າຍ ເຊິ່ງຍັງມີຄວາມແຕກຕ່າງກັນຫຼາຍ ລະຫວ່າງ ປຶ້ມຄູ່ມືດັ່ງກ່າວ ແລະ ມາດຕະຖານສາກົນດ້ານການລາຍງານການເງິນ ເຊັ່ນ: ຊັບສົມບັດຄົງທີ່, ສັນຍາເຊົ່າສິນເຊື່ອ, ຜົນປະໂຫຍດຂອງພະນັກງານ, ຜົນກະທົບຈາກອັດຕາແລກປ່ຽນ, ອາກອນລາຍໄດ້ ແລະ ອາກອນຊ້ຳຊ້ອນ, ເຄື່ອງມືທາງການເງິນ, ເອກະສານລາຍງານ ການເງິນແບບລວມ ແລະ ແບບສະເພາະວິສາຫະກິດ, ຂາຮຸ້ນ, ບໍລິສັດຮຸ້ນສ່ວນ ແລະ ຕົ້ນທຶນກ່ອນການດຳເນີນງານ. ຫຼັກການບັນຊີທີ່ນຳໃຊ້ ມີຄວາມແຕກຕ່າງທີ່ສຳຄັນ ໂດຍທຽບຖານຈາກຫຼັກການບັນຊີ ທີ່ຖືກຮັບຮອງເອົາໂດຍທົ່ວໄປ ລວມທັງມາດຕະຖານສາກົນ ດ້ານການລາຍງານການເງິນ ທີ່ຮັບຮອງເອົາໃນບາງປະເທດ ແລະ ບາງຂອບເຂດ.

ໃນການກະກຽມໃບລາຍງານທາງການເງິນ ຜູ້ບໍລິຫານຕ້ອງໃຊ້ການປະເມີນການ ແລະ ຂໍ້ສົມມຸດຖານທີ່ມີຜົນຕໍ່ການລາຍງານຂອງຊັບສິນ ແລະ ໜີ້ສິນ, ການເປີດເຜີຍຂອງຊັບສິນ ແລະ ໜີ້ສິນ ທີ່ອາດເກີດຂຶ້ນໃນມື້ທີ່ສະແດງໃນໃບລາຍງານທາງການເງິນ ແລະ ມູນຄ່າຂອງລາຍໄດ້ ແລະ ລາຍຈ່າຍໃນການລາຍງານແຕ່ລະໄລຍະ. ເຖິງແມ່ນວ່າການປະເມີນການຢູ່ບົນພື້ນຖານຂອງຄວາມຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ເຫດການທີ່ເກີດຂຶ້ນ ແລະ ຜົນທີ່ເກີດຂຶ້ນຈິງ ອາດແຕກຕ່າງຈາກທີ່ປະເມີນການໄວ້ໃນເບື້ອງຕົ້ນ.

3 ເງິນລົງທຶນໃນບໍລິສັດ ວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ

	ເອກະສານລາຍງານການເງິນ ແບບລວມ/ແບບແຍກ	
ສຳລັບຮອບເວລາສາມເດືອນ ສິ້ນສຸດ ວັນທີ 31 ມີນາ	2018	2017
	(ລ້ານກີບ)	
ວັນທີ 1 ມັງກອນ	2.606.394	2.297.166
ກຳໄລສຸດທິຂອງຮຸ້ນຈາກວິສາຫະກິດຂາຮຸ້ນແລະບໍລິສັດຮຸ້ນສ່ວນ	157.134	15.919
ລາຍໄດ້ເງິນປັນຜົນ	(200.407)	(124.043)
ເພີ່ມຂຶ້ນ	321.383	1.634
ສ່ວນຕ່າງຈາກການແລກປ່ຽນ	73	51
ວັນທີ 31 ມີນາ	**2.884.577**	**2.190.727**

ໃນໄລຍະເວລາສາມເດືອນ ສິ້ນສຸດວັນທີ 31 ມີນາ 2018 ໄດ້ມີການເພີ່ມຂຶ້ນຂອງເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນດັ່ງຕໍ່ໄປນີ້:

ບໍລິສັດ ນ້ຳເທີນ 1 ພາວເວີ້ ຈຳກັດ

ບໍລິສັດ ໄດ້ລົງທຶນໃນບໍລິສັດໄຟຟ້ານ້ຳເທີນ 1 ພາວເວີ້ ຈຳກັດ, ເຊິ່ງເປັນບໍລິສັດຮຸ້ນສ່ວນຈົດທະບຽນສ້າງຕັ້ງດຳເນີນການໃນ ສປປ ລາວ, ພິຈາລະນາເປັນເງິນ 38,59 ລ້ານໂດລາສະຫະລັດ ຫຼື ທຽບເທົ່າ 319.227 ລ້ານກີບ. ບໍລິສັດຮຸ້ນສ່ວນ ດຳເນີນທຸລະກິດ ຜະລິດ ແລະ ຂາຍກະແສໄຟ.

ບໍລິສັດ ນ້ຳພຸນ ພາວເວີ້ ຈຳກັດ

ບໍລິສັດ ໄດ້ລົງທຶນໃນບໍລິສັດໄຟຟ້ານ້ຳພຸນ ພາວເວີ້ ຈຳກັດ, ເຊິ່ງເປັນບໍລິສັດຮຸ້ນສ່ວນຈົດທະບຽນສ້າງຕັ້ງດຳເນີນການໃນ ສປປລາວ, ພິຈາລະນາເປັນເງິນ 665 ລ້ານກີບ. ບໍລິສັດຮຸ້ນສ່ວນ ດຳເນີນທຸລະກິດຜະລິດ ແລະ ຂາຍກະແສໄຟ.

ບໍລິສັດ ຫ້ວຍລຳພັນຕອນລຸ່ມ ຈຳກັດ

ບໍລິສັດ ໄດ້ຈ່າຍເງິນລົງທຶນເພີ່ມເຕີມ ໃຫ້ ບໍລິສັດ ຫ້ວຍລຳພັນຕອນລຸ່ມ ຈຳກັດ ເປັນຈຳນວນ 0,2 ລ້ານໂດລາ ທຽບເທົ່າກັບ 1.491 ລ້ານກີບ. ບໍລິສັດຮຸ້ນສ່ວນ ດຳເນີນທຸລະກິດຜະລິດ ແລະ ຂາຍກະແສໄຟ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ບົດອະທິບາຍຊ້ອນທ້າຍໂດຍຫຍໍ້ ປະກອບເອກະສານລາຍງານການເງິນລວມ

ສຳລັບຮອບເວລາລາຍງານສາມເດືອນ ສິ້ນສຸດ ວັນທີ 31 ມີນາ 2018 (ກ່ອນກວດສອບ)

ເງິນລົງທຶນໃນ ວິສາຫະກິດຮ່ວມ ແລະ ບໍລິສັດຮຸ້ນສ່ວນໃນວັນທີ 31 ມີນາ 2018 ແລະ 31 ທັນວາ 2017 ແລະ ເງິນປັນຜົນສຳລັບງວດສາມເດືອນສິ້ນສຸດວັນທີ 31ມີນາ 2018 ແລະ 2017 ມີດັ່ງນີ້:

	ອັດຕາສ່ວນຂອງເງິນລົງທຶນ			ມູນຄ່າ		ຄ່າເຊື່ອມມູນຄ່າ		ມູນຄ່າສຸດທິ		ທຶນ		ລາຍໄດ້ຈາກເງິນປັນຜົນ	
	31 ມີນາ 2018	31 ທັນວາ 2017	ປະເພດຂອງ ທຸລະກິດ	31 ມີນາ 2018	31 ທັນວາ 2017	31 ມີນາ 2018	31 ທັນວາ 2017	31 ມີນາ 2018	31 ທັນວາ 2017	31 ມີນາ 2018	31 ທັນວາ 2017	31 ມີນາ 2018	31 ມີນາ 2017
	(%)							(ລ້ານກີບ)					
ວິສາຫະກິດຮ່ວມ													
ບໍລິສັດ ໄຟຟ້າ ນ້ຳງຸ່ມ 2 ຈຳກັດ (Nam Ngum 2)	25	25	ຜະລິດໄຟຟ້າ	454.742	454.742	-	-	454.742	454.742	399.510	422.953	23.412	36.774
ບໍລິສັດ ໄຟຟ້າ ນ້ຳລິກ 1-2 ຈຳກັດ (Nam Lik 1-2)	10	10	ຜະລິດໄຟຟ້າ	32.240	32.240	-	-	32.240	32.240	77.564	75.675	-	-
ບໍລິສັດ ໄຟຟ້າ ນ້ຳງຸ່ມ 5 ຈຳກັດ (Nam Ngum 5)	15	15	ຜະລິດໄຟຟ້າ	80.022	80.022	-	-	80.022	80.022	97.061	95.299	-	-
ບໍລິສັດ ນ້ຳເທີນ 1 ພາວເວີ້ ຈຳກັດ (Nam Thuen 1)	15	15	ຜະລິດໄຟຟ້າ	497.163	177.936	-	-	497.163	177.936	493.692	175.565	-	-
ລວມ				**1.064.167**	**744.940**	-	-	**1.064.167**	**744.940**	**1.067.827**	**769.492**	**23.412**	**36.774**
ບໍລິສັດຮຸ້ນສ່ວນ													
ບໍລິສັດ ເຫີນຫີນບຸນ ພາວເວີ ຈຳກັດ (THPC)	60	60	ຜະລິດໄຟຟ້າ	1.120.696	1.120.696	-	-	1.120.696	1.120.696	1.733.660	1.758.512	176.995	87.269
ບໍລິສັດ ຫ້ວຍເຫາະ ພາວເວີ ຈຳກັດ (HHPC)	20	20	ຜະລິດໄຟຟ້າ	1.171	1.171	-	-	1.171	1.171	19.516	16.972	-	-
ບໍລິສັດ ຫ້ວຍລຳພັນຕອນລຸ່ມ ("LHPC")	60	60	ຜະລິດໄຟຟ້າ	11.251	9.760	-	-	11.251	9.760	7.939	6.448	-	-
ບໍລິສັດ ໄຟຟ້າ ນ້ຳດິກ ຈຳກັດ ("Nam Dik 1")	70	70	ຜະລິດໄຟຟ້າ	54.942	54.942	-	-	54.942	54.942	54.130	54.130	-	-
ບໍລິສັດ ໄຟຟ້າ ນ້ຳຟຸ່ນ ພາວເວີ້ ຈຳກັດ ("NPPC")	51	51	ຜະລິດໄຟຟ້າ	1.902	1.237	-	-	1.902	1.237	1.505	840	-	-
ລວມ				**1.189.962**	**1.187.806**	-	-	**1.189.962**	**1.187.806**	**1.816.750**	**1.836.902**	**176.995**	**87.269**
ລວມທັ້ງໝົດ				**2.254.129**	**1.932.746**	-	-	**2.254.129**	**1.932.746**	**2.884.577**	**2.606.394**	**200.407**	**124.043**

ສຳລັບ ເຫີນຫິນບຸນ, ຫ້ວຍເຫາະ, ຫ້ວຍລຳພັນຕອນລຸ່ມ, ນ້ຳດີກ 1 ແລະ ນ້ຳພຸນ, ເຖິງແມ່ນວ່າກຸ່ມບໍລິສັດມີຮຸ້ນສ່ວນຢູ່ໃນບໍລິສັດເຫຼົ່ານັ້ນຫຼາຍກວ່າ ຫຼື ໜ້ອຍກວ່າ 50% ກໍ່ຕາມ, ແຕ່ອີງຕາມເງື່ອນໄຂຂອງບໍລິສັດຮຸ້ນສ່ວນ, ບໍລິສັດໄດ້ ຮັບສິດໃນການລົງມະຕິ ຄະແນນສຽງ ແລະ ສຽງໃນສະພາຜູ້ບໍລິຫານ ຊຶ່ງສາມາດຕັດສິນໃຈໃນເລື່ອງການເງິນ ແລະ ການດຳເນີນງານ (ແຕ່ບໍ່ຫຼາຍເທົ່າບຸກຄົນທີ່ມີອຳນາດຄວບຄຸມທັງໝົດ). ຜູ້ບໍລິຫານຈຶ່ງສາມາດສະຫຼຸບໄດ້ວ່າ ເງິນລົງທຶນເຫຼົ່ານີ້ເປັນເງິນລົງທຶນໃນບໍລິສັດຮຸ້ນສ່ວນ.

ສຳລັບ ນ້ຳລີກ 1-2, ນ້ຳງື່ມ 5 ແລະ ນ້ຳເທີນ 1, ກຸ່ມບໍລິສັດໄດ້ຮັບສິດໃນການອອກສຽງຂອງສະພາຜູ້ບໍລິຫານ ຊຶ່ງ ສາມາດຕັດສິນໃຈໃນເລື່ອງການເງິນ ແລະ ການດຳເນີນງານ (ແຕ່ບໍ່ຫຼາຍເທົ່າບຸກຄົນທີ່ມີອຳນາດຄວບຄຸມທັງໝົດ). ຕາມທີ່ໄດ້ລະບຸໄວ້ໃນສັນຍາຂອງຜູ້ຖືຮຸ້ນ. ຜູ້ບໍລິຫານຈຶ່ງສາມາດສະຫຼຸບໄດ້ວ່າເປັນການລົງທຶນໃນວິສາຫະກິດຮ່ວມຮຸ້ນ.

ວິສະຫະກິດຮ່ວມຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ແມ່ນຍັງບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ສະນັ້ນ ຈຶ່ງບໍ່ມີການເຜີຍແຜ່ລາຄາອ້າງອີງ.

4 ເງິນລົງທຶນຈ່າຍລ່ວງໜ້າ ສຳລັບຊັບສິນພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ

	ເອກະສານລາຍງານການເງິນ ແບບລວມ		**ເອກະສານລາຍງານການເງິນ ແບບແຍກ**	
	2018	2017	2018	2017
		(ລ້ານກີບ)		
ວັນທີ 1 ມັງກອນ	4.436.159	3.133.596	5.101.121	3.133.596
ສ່ວນເພີ່ມ	-	-	91.803	-
ຫຼຸດລົງ	(23.976)	-	(23.976)	-
ລາຍຈ່າຍທາງການເງິນ	3.288	3.192	3.288	3.192
ວັນທີ 31 ມີນາ	**4.415.471**	**3.136.788**	**5.172.236**	**3.136.788**

ສິ່ງເຫຼົ່ານີ້ແມ່ນ ການພົວພັນເຖິງລາຍຈ່າຍລ່ວງໜ້າທີ່ຈ່າຍໃຫ້ກັບ ຟຟລ ສຳລັບຄ່າໃຊ້ຈ່າຍ ທີ່ເກີດຈາກໂຄງການ ຊັບສິນພາຍໃຕ້ສັນຍາສຳປະທານ ທີ່ກ່ຽວຂ້ອງກັບບົດບັນທຶກຄວາມເຂົ້າໃຈ. ບໍລິສັດໄດ້ຈ່າຍເງິນລົງທຶນລ່ວງໜ້າ ສຳລັບຊັບສິນພາຍໃຕ້ສຳປະທານ ພາຍໃຕ້ບົດບັນທຶກຄວາມເຂົ້າໃຈ ໃນວັນທີ 31 ມີນາ 2018 ແລະ ວັນທີ 31 ທັນວາ 2017 ສັ່ງລວມດັ່ງລຸ່ມນີ້:

		ເອກະສານລາຍງານການເງິນ ແບບລວມ		**ເອກະສານລາຍງານການເງິນ ແບບແຍກ**	
	ປະເພດ	31 ມີນາ 2018	31 ທັນວາ 2017	31 ມີນາ 2018	31 ທັນວາ 2017
			(ລ້ານກີບ)		
ນ້ຳບີ	ບໍລິສັດລູກ	-	-	455.471	363.668
ບໍລິສັດ ອີດີແອວເຈັນໂຊລາ	ບໍລິສັດລູກ	-	-	301.294	301.294
ນ້ຳຄານ 3	ຊັບສິນ	318.704	315.416	318.704	315.416
ນ້ຳຈຽນ 1	ຊັບສິນ	678.504	678.504	678.504	678.504
ນ້ຳຫີນບຸນ	ຊັບສິນ	205.955	205.955	205.955	205.955
ເຊເສັດ 3	ຊັບສິນ	149.418	149.418	149.418	149.418
ນ້ຳງື່ມ 1 Ext DFE	ຊັບສິນ	488.494	488.494	488.494	488.494
ນ້ຳງື່ມ 1 Ext Unit 6	ຊັບສິນ	242.231	242.231	242.231	242.231
ນ້ຳອູ 2,5,6	IPP	364.640	364.640	364.640	364.640
ນ້ຳງຽບ 2	IPP	111.470	111.470	111.470	111.470
ນ້ຳແບ	IPP	18.162	42.138	18.162	42.138
ເຊຊະໜາມ 3	IPP	232.163	232.163	232.163	232.163
ນ້ຳລີກ 1	IPP	34.680	34.680	34.680	34.680
ນ້ຳມັ່ງ 1	IPP	37.596	37.596	37.596	37.596
ນ້ຳທາ 1	IPP	244.474	244.474	244.474	244.474
ໄຊຍະບຸລີ ແລະ ດອນສະໂຮງ	IPP	1.288.980	1.288.980	1.288.980	1.288.980
ລວມ		**4.415.471**	**4.436.159**	**5.172.236**	**5.101.121**

ສັນຍາຊື້ຂາຍຮຸ້ນ (ສັນຍາ) ຂອງໂຄງການ ບໍລິສັດ ໄຟຟ້າ ນ້ຳແບ໋ງ ຈຳກັດ.

ໃນວັນທີ 26 ມີນາ 2018, ບໍລິສັດ ແລະ ຟຟລ ໄດ້ເຊັນສັນຍາຊື້ຂາຍຮຸ້ນ ສຳລັບການຖ່າຍໂອນຮຸ້ນ ໃນບໍລິສັດ ໄຟຟ້າ ນ້ຳແບ໋ງ ຈຳກັດ.

ພາຍໃຕ້ສັນຍາຊື້ຂາຍຮຸ້ນ, ຟຟລ ໄດ້ຕົກລົງໂອນຮຸ້ນຈຳນວນ 10% ຂອງ ບໍລິສັດ ໄຟຟ້າ ນ້ຳແບ໋ງ ຈຳກັດ ໃຫ້ບໍລິສັດ ໃນມູນຄ່າ 2,3 ລ້ານໂດລາ. ຫຼັງຈາກຫັກລົບກັບເງິນລົງທຶນຈ່າຍລ່ວງໜ້າ, ຟຟລ ຈະຕ້ອງຈ່າຍຄືນໃຫ້ ບໍລິສັດ ເປັນຈຳນວນ 2,9 ລ້ານໂດລາ. ການຈັດການວຽກງານເອກະສານທີ່ກ່ຽວຂ້ອງຄາດວ່າຈຳສຳເລັດໃນປີ 2018.

5 ຊັບສິນພາຍໃຕ້ສັນຍາສຳປະທານ

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບ ແຍກ	
ຮອບເວລາ ສາມເດືອນ ສິ້ນສຸດ ວັນທີ 31 ມີນາ	2018	2017	2018	2017
		(ລ້ານກີບ)		
ວັນທີ 1 ມັງກອນ	9.790.198	9.435.337	9.408.829	9.412.504
ເພີ່ມຂຶ້ນ	23.288	242.162	2.279	263
ຫັກຄ່າຫຼ້ຽຫ້ຽນ	(105.909)	(103.350)	(105.673)	(103.100)
ວັນທີ 31 ມີນາ	**9.707.577**	**9.574.149**	**9.305.435**	**9.309.667**

6 ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນ

	ບົດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ມີນາ 2018	31 ທັນວາ 2017	31 ມີນາ 2018	31 ທັນວາ 2017
			(ລ້ານກີບ)		
ໜີ້ຕ້ອງຮັບການຄ້າຈາກພາກສ່ວນທີ່ກ່ຽວຂ້ອງ	*12*	350.381	142.172	346.730	137.316
ໜີ້ຕ້ອງຮັບອື່ນໆຈາກພາກສ່ວນທີ່ກ່ຽວຂ້ອງ	*12*	54.789	2.140	55.277	2.142
ອື່ນໆ		1.054	5.140	2.440	5.140
ລວມ		**406.224**	**149.452**	**404.447**	**144.598**

7 ໜີ້ສິນທີ່ມີພາລະດອກເບ້ຍ

	ເອກະສານລາຍງານການເງິນ ແບບລວມ/ແບບແຍກ	
	31 ມີນາ 2018	31 ທັນວາ 2017
	(ລ້ານກີບ)	
ເງິນກູ້ຢືມໄລຍະສັ້ນ		
ເງິນກູ້ຢືມໄລຍະຍາວ ຈັດເປັນໄລຍະສັ້ນ	911.199	870.573
- ເງິນກູ້ຢືມໄລຍະຍາວ ຈາກພາກສ່ວນທີ່ກ່ຽວຂ້ອງ	443.711	442.848
- ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ	197.917	87.064
ລວມເງິນກູ້ຢືມໄລຍະຍາວ-ຈັດເປັນໄລຍະສັ້ນ	**1.552.827**	**1.400.485**
ເງິນກູ້ຢືມໄລຍະຍາວ ຈັດເປັນໄລຍະຍາວ		
- ເງິນກູ້ຢືມໄລຍະຍາວ ຈາກພາກສ່ວນທີ່ກ່ຽວຂ້ອງ	3.668.657	3.710.946
- ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ	685.833	499.590
ຫຼຸດຜ່ອນ ຄ່າທຳນຽມຄ່າໃຊ້ຈ່າຍ	(6.981)	(4.188)
ລວມເງິນກູ້ຢືມໄລຍະຍາວ-ຈັດເປັນໄລຍະຍາວ	**4.347.509**	**4.206.348**
ລວມໜີ້ສິນທີ່ມີພາລະດອກເບ້ຍ	**5.900.336**	**5.606.833**

ການເຄື່ອນໄຫວເງິນກູ້ຢືມໄລຍະຍາວ ສຳລັບ ໄລຍະເວລາສາມເດືອນ ສິ້ນສຸດວັນທີ 31 ມີນາ 2018 ແລະ 2017 ມີດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ/ແບບແຍກ	
ຮອບເວລາ ສາມເດືອນ ສິ້ນສຸດ ວັນທີ 31 ມີນາ	2018	2017
	(ລ້ານກີບ)	
ວັນທີ 1 ມັງກອນ	5.606.833	1.058.783
ເພີ່ມຂຶ້ນ	372.010	3.972.056
ຈ່າຍເງິນຄືນ	(83.525)	(82.574)
ຜົນກະທົບຈາກການແລກປ່ຽນເງິນຕາ	6.759	18.255
ຕົ້ນທຶນຄ່າທຳນຽມເງິນກູ້ລໍຖ້າຕັດບັນຊີ	(1.741)	(404)
ວັນທີ 31 ມີນາ	**5.900.336**	**4.966.116**

ເງິນກູ້ຢືມໄລຍະສັ້ນ

ໃນລະຫວ່າງຊ່ວງໄລຍະສາມເດືອນ ສິ້ນສຸດ ວັນທີ 31 ມີນາ 2018, ບໍລິສັດໄດ້ຮັບເງິນກູ້ເພີ່ມ ຈາກທະນາຄານຫວຽດຕົ້ນ ເປັນຈຳນວນ 4,7 ລ້ານ ໂດລາສະຫະລັດ ຫຼື ທຽບເທົ່າ 39.570 ລ້ານກີບ

ເງິນກູ້ຢືມໄລຍະຍາວ

ໃນວັນທີ 20 ທັນວາ 2017, ບໍລິສັດໄດ້ເຊັນສັນຍາສິນເຊື່ອກັບທະນາຄານ Industrial and Commercial Bank of China Vientiane branch ("ICBC") ສຳລັບສິນເຊື່ອ ຈຳນວນ 40 ລ້ານໂດລາ ສຳລັບໃຊ້ເປັນທຶນໝຸນວຽນ. ໃນອັດຕາ ດອກເບ້ຍ LIBOR 6 months+3,20 ຕໍ່ປີ, ບໍລິສັດໄດ້ຮັບເງິນກູ້ຢືມອີງເງິນທີ 1 ລວມຈຳນວນ 30 ລ້ານໂດລາສະຫະລັດ ແລະ ໄດ້ຮັບເງິນກູ້ຢືມອີງເງິນທີ 2 ເປັນຈຳນວນ 10 ລ້ານໂດລາສະຫະລັດ. ບໍລິສັດໄດ້ຮັບເງິນກູ້ທັ້ງສອງງວດ ເປັນຈຳນວນ 40 ລ້ານໂດລາສະຫະລັດ ຫຼື ທຽບເທົ່າ 332.400 ລ້ານກີບ ໃນວັນທີ 2 ມັງກອນ 2018 ແລະ ຈະຄົບສັນຍາເງິນກູ້ ພາຍໃນ 3 ປີ ຫຼັງຈາກຖອນເງິນ.

8 ຮຸ້ນກູ້

	ເອກະສານລາຍງານການເງິນ ແບບລວມ/ແບບແຍກ	
	31 ມີນາ 2018	31 ທັນວາ 2017
	(ລ້ານກີບ)	
ຮຸ້ນກູ້	4.334.083	4.222.933
ລາຍຈ່າຍໃນການດຳເນີນງານ	(68.970)	(70.051)
ສຸດທິ	**4.265.113**	**4.152.882**

ການເຄື່ອນໄຫວໃນຮຸ້ນກູ້ ສຳລັບຮອບໄລຍະເວລາ ສາມເດືອນ ສິ້ນສຸດວັນທີ 31 ມີນາ 2018 ແລະ 2017 ມີດັ່ງຕໍ່ໄປນີ້

ຮອບເວລາ ສາມເດືອນ ສິ້ນສຸດ ວັນທີ 31 ມີນາ	ເອກະສານລາຍງານການເງິນ ແບບລວມ/ແບບແຍກ	
	2018	2017
	(ລ້ານກີບ)	
ໃນວັນທີ 1 ມັງກອນ	4.152.882	3.985.936
ການຫຼຸດຜ່ອນຄ່າທຳນຽມໃນການຈັດຈຳໜ່າຍ	1.081	2.359
ຜົນກະທົບຈາກການແລກປ່ຽນເງິນຕາ	111.150	67.579
ໃນວັນທີ 31 ມີນາ	**4.265.113**	**4.055.874**

ສັ່ງລວມຂໍ້ກຳນົດ ແລະ ເງື່ອນໄຂທີ່ສຳຄັນ ຂອງການອອກຮຸ້ນກູ້ ໃນປີ 2016 ໄດ້ລະບຸໄວ້ໃນຕາມຕະລາງ ດັ່ງລຸ່ມນີ້:

ລາຍການ	ຮຸ້ນແບບ 1	ຮຸ້ນແບບ 2	ຮຸ້ນແບບ 3
ປະເພດ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບ ຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບ ຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບ ຄ້ຳປະກັນ
ການຈ່າຍຄືນ	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ
ລວມລາຄາທີ່ສະເໜີ	51 ລ້ານໂດລາ	166 ລ້ານໂດລາ	95ລ້ານໂດລາ
ຈຳນວນທີ່ອອກ	51.000 ໜ່ວຍ	166.000 ໜ່ວຍ	95.000 ໜ່ວຍ
ອັດຕາດອກເບ້ຍ	ຄົງທີ່ 5% ຕໍ່ ປີ	ຄົງທີ່ 5,59% ຕໍ່ ປີ	ຄົງທີ່ 5,98% ຕໍ່ ປີ
ອັດຕາດອກເບ້ຍທີ່ແທ້ຈິງ	5,24% ຕໍ່ປີ	5,85% ຕໍ່ປີ	6,26% ຕໍ່ ປີ
ກຳນົດຈ່າຍດອກເບ້ຍ	ສອງຄັ້ງຕໍ່ປີ, ວັນທີ 2 ມີນາ ແລະ 2 ກັນຍາ	ສອງຄັ້ງຕໍ່ປີ, ວັນທີ 2 ມີນາ ແລະ 2 ກັນຍາ	ສອງຄັ້ງຕໍ່ປີ, ວັນທີ 2 ມີນາ ແລະ 2 ກັນຍາ
ອາຍຸ	7 ປີ	10 ປີ	12 ປີ
ວັນທີ ຄົບກຳນົດ	2 ກັນຍາ 2023	2 ກັນຍາ 2026	2 ກັນຍາ 2028

ສັງລວມຂໍ້ກຳນົດ ແລະ ເງື່ອນໄຂທີ່ສຳຄັນ ຂອງການອອກຮຸ້ນກູ້ ໃນປີ 2014 ໄດ້ລະບຸໄວ້ໃນຕາມຕະລາງ ດັ່ງລຸ່ມນີ້:

ລາຍການ	ຮຸ້ນແບບ 1	ຮຸ້ນແບບ 2	ຮຸ້ນແບບ 3
ປະເພດ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບ ຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບ ຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບ ຄ້ຳປະກັນ
ການຈ່າຍຄືນ	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ
ລວມລາຄາທີ່ສະເໜີ	1.500 ລ້ານບາດ	2.000 ລ້ານບາດ	3.000 ລ້ານບາດ
ຈຳນວນທີ່ອອກ	1.500.000 ໜ່ວຍ	2.000.000 ໜ່ວຍ	3.000.000 ໜ່ວຍ
ອັດຕາດອກເບ້ຍ	ຄົງທີ່ 4,95% ຕໍ່ ປີ	ຄົງທີ່ 5,20% ຕໍ່ ປີ	ຄົງທີ່ 5,45% ຕໍ່ ປີ
ອັດຕາດອກເບ້ຍທີ່ແທ້ຈິງ	5,26% ຕໍ່ປີ	5,54% ຕໍ່ປີ	5,82% ຕໍ່ ປີ
ກຳນົດຈ່າຍດອກເບ້ຍ	ສອງຄັ້ງຕໍ່ປີ, ວັນທີ 12 ມິຖຸ ນາ ແລະ 12 ທັນວາ	ສອງຄັ້ງຕໍ່ປີ, ວັນທີ 12 ມິຖຸ ນາ ແລະ 12 ທັນວາ	ສອງຄັ້ງຕໍ່ປີ, ວັນທີ 12 ມິຖຸ ນາ ແລະ 12 ທັນວາ
ອາຍຸ	5 ປີ	7 ປີ	10 ປີ
ວັນທີ ຄົບກຳນົດ	12 ທັນວາ 2019	12 ທັນວາ 2021	12 ທັນວາ 2024

9 ອານຸພັນທາງການເງິນ

(ກ) ສັນຍາແລກປ່ຽນເງິນຕາຕ່າງປະເທດ swap

	ເອກະສານລາຍງານການເງິນ ແບບລວມ/ແບບແຍກ	
	31 ມີນາ 2018	31 ທັນວາ 2017
	(ລ້ານກີບ)	
ໜີ້ຕ້ອງຮັບສັນຍາແລກປ່ຽນເງິນຕາ	1.727.180	1.650.805
ໜີ້ຕ້ອງຈ່າຍສັນຍາແລກປ່ຽນເງິນຕາ	(1.642.584)	(1.642.584)
ສ່ວນຕ່າງກຳໄລສັນຍາແລກປ່ຽນເງິນຕາ	(11.465)	(12.077)
ສຸດທິ	**73.131**	**(3.856)**

ສັງລວມເງື່ອນໄຂຂອງສັນຍາແລກປ່ຽນເງິນຕາຕ່າງປະເທດ ທີ່ສຳຄັນມີດັ່ງນີ້:

ລຳດັບ	ຈຳນວນທີ່ອອກຮຸ້ນກູ້ (ລ້ານບາດ)	Swap ຈຳນວນ (ລ້ານໂດລາ)	ໄລຍະການຊຳລະເງິນ	ອັດຕາດອກເບ້ຍທີ່ແທ້ຈິງ	ອັດຕາ Swap	ໄລຍະການຊຳລະເງິນ
1	1.500	45,59	ເດືອນ ທັນວາ 2019	4,95%	Libor 6 ເດືອນ+3,36%	ສອງຄັ້ງຕໍ່ປີ ໂດຍເລີ່ມຈາກ ເດືອນ ມິຖຸນາ 2015 ເຖິງ ເດືອນ ທັນວາ 2019
2	2.000	60,79	ເດືອນ ທັນວາ 2021	5,20%	Libor 6 ເດືອນ+3,61%	ສອງຄັ້ງຕໍ່ປີ ໂດຍເລີ່ມຈາກ ເດືອນ ມິຖຸນາ 2015 ເຖິງ ເດືອນ ທັນວາ 2021
3	3.000	91,18	ເດືອນ ທັນວາ 2024	5,45%	Libor 6 ເດືອນ+3,795%	ສອງຄັ້ງຕໍ່ປີ ໂດຍເລີ່ມຈາກ ເດືອນ ມິຖຸນາ 2015 ເຖິງ ເດືອນ ທັນວາ 2024

(ຂ) ສັນຍາແລກປ່ຽນອັດຕາດອກເບ້ຍ

ໃນໄລຍະປີ 2017, ບໍລິສັດ ໄດ້ເຮັດສັນຍາປ້ອງກັນຄວາມສ່ຽງ ຈາກອັດຕາດອກເບ້ຍ ***Collar*** ກັບສະຖາບັນການເງິນໃຫ. ໂດຍມີຈຸດປະສົງເພື່ອບໍລິຫານຄວາມສ່ຽງຈາກຄວາມຜັນຜວນຂອງອັດຕາດອກເບ້ຍຮຸ້ນກູ້ ໂດຍມີວົງເງິນບໍ່ເກີນ 198 ລ້ານໂດລາ ຫຼື ທຽບເທົ່າ 1.642.584 ລ້ານກີບ ຊຶ່ງມີອັດຕາດອກເບ້ຍອ້າງອີງຄື LIBOR 6 ເດືອນ ("LIBOR") ໂດຍບໍລິສັດຈະຈ່າຍ ແລະ ຮັບດອກເບ້ຍ ຕາມທີ່ລະບຸໄວ້ໃນສັນຍາເປັນສອງຄັ້ງຕໍ່ປີ. ສັນຍາຈະໝົດອາຍຸລົງຕັ້ງແຕ່ເດືອນທັນວາ 2019 ເຖິງ 2021. ຄູ່ສັນຍາຮຽກຮ້ອງໃຫ້ບໍລິສັດຈ່າຍເງິນລ່ວງໜ້າ ຊຶ່ງຈະຊຳລະຕາມມື້ກຳນົດຊຳລະບັນຊີ.

10 ລາຍຈ່າຍຄ້າງຈ່າຍ

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	31 ມີນາ 2018	31 ທັນວາ 2017	31 ມີນາ 2018	31 ທັນວາ 2017
	(ລ້ານກີບ)			
ດອກເບ້ຍຄ້າງຈ່າຍ	129.788	87.160	129.788	87.160
ຄ່າພາກຫຼວງ ແລະ ອາກອນອື່ນໆຄ້າງຈ່າຍ	11.628	16.489	10.852	16.151
ອື່ນໆ	30.215	7.573	30.214	7.456
ລວມ	**171.631**	**111.222**	**170.854**	**110.767**

11 ກຳໄລພື້ນຖານຕໍ່ຮຸ້ນ

ການຄຳນວນກຳໄລພື້ນຖານຕໍ່ຮຸ້ນ ສຳລັບຮອບເວລາສາມເດືອນ ສິ້ນສຸດ ໃນວັນທີ 31 ມີນາ 2018 ແລະ 2017 ແມ່ນຄິດໄລ່ ກຳໄລສຸດທິໃນຮອບເວລາທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງກຸ່ມບໍລິສັດ ແລະ ຈຳນວນຮຸ້ນສາມັນສະເລ່ຍທີ່ອອກຈຳໜ່າຍລະຫວ່າງ ໄລຍະເວລາ ດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	2018	2017	2018	2017
ກຳໄລທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນ ຂອງບໍລິສັດ *(ລ້ານກີບ)*	34.203	15.969	33.559	16.166
ຈຳນວນຮຸ້ນທີ່ອອກຈຳໜ່າຍ *(ລ້ານຮຸ້ນ)*	1.679	1.679	1.679	1.679
ກຳໄລພື້ນຖານຕໍ່ຮຸ້ນ *(ກີບ)*	**20,37**	**9,51**	**19,98**	**9,63**

12 ພາກສ່ວນທີ່ກ່ຽວຂ້ອງ

ຄວາມສຳພັນກັບກິດຈະການທີ່ກ່ຽວຂ້ອງ ມີດັ່ງນີ້:

ຊື່ຂອງສຳນັກງານ	**ສ້າງຕັ້ງຂຶ້ນໃນປະເທດ/ສັນຊາດ**	**ລັກສະນະຄວາມສຳພັນ**
ລັດວິສາຫະກິດໄຟຟ້າລາວ	ສ ປປ ລາວ	ບໍລິສັດແມ່
ບໍລິສັດ ນ້ຳບີ ພາວເວີ້ ຈຳກັດ	ສ ປປ ລາວ	ບໍລິສັດລູກ
ບໍລິສັດ ອີດີເອວເຈນ ໂຊ່ລ່າ ພາວເວີ້ ຈຳກັດ	ສ ປປ ລາວ	ບໍລິສັດລູກ
ບໍລິສັດ ໄຟຟ້າ ຫ້ວຍເຫາະ ຈຳກັດ	ສ ປປ ລາວ	ບໍລິສັດ ຮຸ້ນສ່ວນ

ນະໂຍບາຍການກຳນົດລາຄາໂດຍສະເພາະການດຳເນີນງານສຳລັບແຕ່ລະລາຍການເປັນໄປດັ່ງນີ້:

ລາຍການ	**ນະໂຍບາຍລາຄາ**
ຂາຍໄຟຟ້າ	ລາຄາຕາມສັນຍາ
ລາຍຈ່າຍດອກເບ້ຍ	ອັດຕາດອກເບ້ຍຕາມສັນຍາ

ລາຍການເຄື່ອນໄຫວທີ່ສຳຄັນສຳລັບຮອບໄລຍະເວລາ ສາມເດືອນ ສິ້ນສຸດວັນທີ 31 ມີນາ 2018 ແລະ 2017 ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ		**ເອກະສານລາຍງານການເງິນແບບ ແຍກ**	
	2018	2017	2018	2017
		(ລ້ານກີບ)		
ບໍລິສັດແມ່				
ຂາຍກະແສໄຟຟ້າ	221.465	243.698	217.588	243.194
ລາຍຈ່າຍທາງການເງິນ	49.685	49.492	49.685	49.492
ລາຍຮັບທາງການເງິນ	5.198	635	5.198	635

ຍອດຄົງເຫຼືອໃນວັນທີ 31 ມີນາ 2018 ແລະ 31 ທັນວາ 2017 ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	31 ມີນາ 2018	31 ທັນວາ 2017	31 ມີນາ 2018	31 ທັນວາ 2017
	(ລ້ານກີບ)			
ຈ່າຍລ່ວງໜ້າສຳລັບ ຊັບສິນພາຍໃຕ້ສັນຍາ ສຳປະທານ ແລະ ເງິນລົງທຶນ				
ບໍລິສັດແມ່				
ລັດວິສາຫະກິດໄຟຟ້າລາວ	3.126.491	4.398.656	3.126.491	4.398.656
ບໍລິສັດລູກ				
ບໍລິສັດ ນ້ຳປີ ພາວເວີ ຈຳກັດ	-	-	455.472	363.668
ບໍລິສັດ ອີດີເອວເຈນ ໂຊ່ລ່າ ພາວເວີ້ ຈຳກັດ	-	-	301.295	301.295
ລວມ	**3.126.491**	**4.398.656**	**3.883.258**	**5.063.619**
ເງິນໃຫ້ກູ້ໄລຍະສັ້ນກັບພາກສ່ວນທີ່ກ່ຽວຂ້ອງ				
ບໍລິສັດແມ່				
ລັດວິສາຫະກິດໄຟຟ້າລາວ	463.392	463.392	463.392	463.392
ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ				
ບໍລິສັດແມ່				
ລັດວິສາຫະກິດໄຟຟ້າລາວ	405.170	144.312	401.519	138.970
ບໍລິສັດລູກ				
ບໍລິສັດ ນ້ຳປີ ພາວເວີ້ ຈຳກັດ	-	-	488	488
ລວມ	**405.170**	**144.312**	**402.007**	**139.458**
ເງິນກູ້ຢືມໄລຍະຍາວ				
ບໍລິສັດແມ່				
ລັດວິສາຫະກິດໄຟຟ້າລາວ				
- ໄລຍະສັ້ນ	443.711	442.848	443.711	442.848
- ໄລຍະຍາວ	3.668.657	3.710.946	3.668.657	3.710.946
ລວມ	**4.112.368**	**4.153.794**	**4.112.368**	**4.153.794**

ສັນຍາທີ່ສຳຄັນຕ່າງໆກັບພາກສ່ວນທີ່ກ່ຽວຂ້ອງ

ສັນຍາຊື້ຂາຍຮຸ້ນ ບໍລິສັດ ໄຟຟ້ານ້ຳລອງ ພາວເວີ້ ຈຳກັດ ("ສັນຍາ")

ໃນວັນທີ 26 ມີນາ 2018, ບໍລິສັດ ແລະ ຟຟລ ໄດ້ລົງນາມໃນສັນຍາຊື້ຂາຍຮຸ້ນ ສຳລັບການຖ່າຍໂອນຮຸ້ນ ຈຳນວນ 20% ໃນ ບໍລິສັດ ໄຟຟ້າ ນ້ຳລອງ ພາວເວີ້ ຈຳກັດ, ໂດຍພິຈະລະນາເປັນເງິນ 650.000 ໂດລາ.

13 ເຫດການທີ່ເກີດຂຶ້ນພາຍຫຼັງວັນທີ່ເອກະສານລາຍງານການເງິນ

ກອງປະຊຸມຜູ້ຖືຮຸ້ນປະຈຳປີ, ຈັດຂຶ້ນໃນວັນທີ 6 ເມສາ 2018, ມີມັດຕິອະນຸມັດການຈ່າຍເງິນປັນຜົນລະຫວ່າງການປີ ສຳລັບຜົນ ກຳໄລສຸດທິ ສຳລັບຮອບໄລຍະເວລາ 1 ກໍລະກົດ ຫາ 31 ທັນວາ 2017 ເປັນຈຳນວນ 180 ກີບຕໍ່ຮຸ້ນ ລວມເປັນເງິນ ທັງໝົດ 302.270 ລ້ານກີບ. ເງິນປັນຜົນໄດ້ຖືກຈ່າຍໃນວັນທີ 9 ພຶດສະພາ 2018.

ໃນວັນທີ 2 ເມສາ 2018, ບໍລິສັດໄດ້ລົງທຶນເພີ່ມໃນບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ອີດີແອວເຈ ຈຳກັດຜູ້ດຽວ ("O&M"), ຊຶ່ງເປັນບໍລິສັດລູກ ທີ່ດຳເນີນທຸລະກິດ ໃນ ສປປລາວ ເປັນເງິນລົງທຶນ 2.400 ລ້ານກີບ.

ผู้อำนวยการใหญ่



ลัดตะนา ปะทุมอัน
ผู้อำนวยการใหญ่

หัวหน้าพะแนกบันชี

ลำใบ ทลวงไชฺ

หัวหน้าพะแนกกวดสอบพายใน

มะนิวัน ยอดกองมี
